# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

25-31 ທັນວາ 2025
ປີທີ 14
ສະບັບທີ 1047
ລາຍສັປະດາ


## ສານອວຍພອນປີໃໝ່ສາກົນ ຄ.ສ 2026 ຂອງສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່, ປະທານປະເທດ



ພີ່ນ້ອງຮ່ວມຊາດ, ເພື່ອນມິດສະຫາຍ ທີ່ຢູ່ໃກ້ ແລະ ໄກ ທີ່ນັບຖືຮັກແພງທັງຫຼາຍ!

ໃນໂອກາດອັນສະຫງ່າລາສີທີ່ພວກເຮົາກຳລັງພ້ອມກັນສົ່ງທ້າຍປີເກົ່າ ຄ.ສ 2025 ແລະ ຕ້ອນຮັບປີໃໝ່ສາກົນ ຄ.ສ 2026 ທີ່ມາເຖິງນີ້, ໃນນາມການນຳຂອງພັກ ແລະ ລັດ ແລະ ໃນນາມສ່ວນຕົວ, ຂ້າພະເຈົ້າຂໍສົ່ງຄຳອວຍພອນອັນປະເສີດມາຍັງພີ່ນ້ອງຮ່ວມຊາດທຸກທົ່ວໜ້າ ທີ່ກຳລັງດຳລົງຊີວິດຢູ່ພາຍໃນປະເທດ, ລວມທັງພີ່ນ້ອງຊາວລາວ ທີ່ກຳລັງດຳລົງຊີວິດຢູ່ຕ່າງປະເທດ, ພ້ອມດຽວກັນນີ້ ຂໍສົ່ງຄຳອວຍພອນ ແລະ ຄວາມປາຖະໜາດີ ໄປຍັງເພື່ອນມິດສາກົນ ຈົ່ງມີຄວາມສຸກແລະຄວາມເປັນສິລິມຸງຄຸນໃນຊີວິດ ມານະໂອກາດນີ້ດ້ວຍ.

ອ່ານຕໍ່ໜ້າ 8

## ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ຈະເປີດຂຶ້ນໃນວັນທີ 6-8 ມັງກອນນີ້




(ສພຊ) - ວັນທີ 26 ທັນວານີ້, ຄະນະບໍລິຫານງານສູນກາງພັກ ໄດ້ດຳເນີນກອງປະຊຸມຄົບຄະນະ ຄັ້ງທີ 12 ສະໄໝທີ XI ພາຍໃຕ້ການເປັນປະທານຂອງສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ໂດຍການເຂົ້າຮ່ວມຂອງບັນດາສະຫາຍຄະນະບໍລິຫານງານສູນກາງພັກ ເຊິ່ງກອງປະຊຸມໄດ້ຮັບ

ອ່ານຕໍ່ໜ້າ 12



ແນວຄິດປະທານ
### ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ຢາກດັດແປງຖັນແຖວພະນັກງານໄດ້ ກ່ອນອື່ນໝົດຕ້ອງດັດແປງພາກສ່ວນທີ່ເຮັດວຽກງານຈັດຕັ້ງພະນັກງານ ນັບແຕ່ຈິນຕະນາການໄປເຖິງແບບແຜນວິທີເຮັດວຽກ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 175)

ຈຸດພິເສດພື້ນຖານຂອງແບບແຜນເຮັດວຽກແບບໃໝ່ ແມ່ນຄວາມເປັນອັນໜຶ່ງອັນດຽວກັນລະຫວ່າງທິດສະດີກັບພຶດຕິກຳ, ລະຫວ່າງຄວາມເວົ້າກັບການກະທຳ, ເຮັດຢ່າງມີຜົນຕົວຈິງ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 179)

ແບບແຜນເຮັດວຽກແບບໃໝ່ ມັນເລັ່ງທວງໃຫ້ພະນັກງານທຸກຄົນ ເປັນຕົ້ນແມ່ນພະນັກງານນຳພາ ແລະ ຄຸ້ມຄອງ ທີ່ເປັນຫົວຈັກຫຼັກແຫຼ່ງ ຕ້ອງກຳແໜ້ນທິດສະດີມາກ-ເລນິນ, ເພາະວ່າ ຖ້າບໍ່ມີທິດສະດີປະຕິວັດແລ້ວ ກໍຈະບໍ່ມີຂະບວນການປະຕິວັດ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 179)

ອ່ານຕໍ່ສະບັບໜ້າ

## ກອງປະຊຸມຄະນະປະຈຳການຂອງ ຄລຊ


ທ່ານ ປອ. ໄຊສົມພອນ ພົມວິຫານ

(ສພຊ) - ວັນທີ 24 ທັນວານີ້ ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມຄະນະປະຈຳການຂອງຄະນະກຳມະການເລືອກຕັ້ງລະດັບຊາດ (ຄລຊ) ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະກຳມະການເລືອກຕັ້ງລະດັບຊາດ ເຊິ່ງມີບັນດາທ່ານ

ອ່ານຕໍ່ໜ້າ 8

## ເຝິກອົບຮົມວຽກງານເລືອກຕັ້ງໃຫ້ພະນັກງານຫຼັກແຫຼ່ງອ້ອມຂ້າງ ນວ



(ສພຊ) - ວັນທີ 30 ທັນວານີ້ ທີ່ຫ້ອງປະຊຸມສຳນັກງານອົງການປົກຄອງນະຄອນຫຼວງວຽງຈັນ ໄດ້ມີການເຝິກອົບຮົມ, ເຜີຍແຜ່ ແລະ ເຊື່ອມຊຶມ ເອກະສານວຽກງານເລືອກຕັ້ງ ໃຫ້ແກ່ພະນັກງານຫຼັກແຫຼ່ງອ້ອມຂ້າງ

ອ່ານຕໍ່ໜ້າ 8

## ບຸນກິນຈຽງຊົນເຜົ່າມົ້ງຢູ່ແຂວງວຽງຈັນ ຈັດຂຶ້ນດ້ວຍບັນຍາກາດທີ່ຄຶກຄື້ນ




(ສພຊ) - ພິທີສະເຫຼີມສະຫຼອງບຸນກິນຈຽງຊົນເຜົ່າມົ້ງ ຈຸດສຸມກຸ່ມບ້ານພັດທະນາ-ນາເລົາ ຫຼັກ 52 ເມືອງໂພນໂຮງ ແຂວງວຽງຈັນ ປະຈຳປີ 2025 ໄດ້ຈັດຂຶ້ນເມື່ອວັນທີ 23 ທັນວາຜ່ານມາ ດ້ວຍບັນຍາກາດທີ່ຄຶກຄື້ນມ່ວນຊື່ນ ໂດຍມີທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ທ່ານ

ອ່ານຕໍ່ໜ້າ 7

## ສຳເລັດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຂ ໄຊຍະບູລີ



ອ່ານຕໍ່ໜ້າ 7


ໃບເຕີຍ...
(ໜ້າ 9)


ທອງດນາມ...
(ໜ້າ 10)



ຄ່າເຮືອງທຸກ ...
(ໜ້າ 12)

# ເຝິກອົບຮົມວຽກງານເລືອກຕັ້ງ ໃຫ້ພະນັກງານແຂວງໄຊຍະບູລີ



(ສພຊ) - ວັນທີ 31 ທັນວານີ້ ທີ່ຫ້ອງປະຊຸມໃຫຍ່ແຂວງໄຊຍະບູລີ ໄດ້ມີການເຝິກອົບຮົມກະກຽມ ແລະ ດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ 7 ຊຸດທີX ແລະສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ V ໂດຍການເປັນປະທານຂອງທ່ານ ເພັງນິລັນ ຄຳພັນເພັງ ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ປະທານຄະນະກຳມະການເລືອກຕັ້ງແຂວງໄຊຍະບູລີ, ມີທ່ານ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ກຳມະການຄະນະກຳມະການເລືອກຕັ້ງລະດັບຊາດ, ທ່ານ ດວງຕາ ໄຊວຸດ ປະທານຄະນະກຳມະການປົກຄອງແຂວງ, ບັນດາຄະນະປະຈຳ ແລະ ກຳມະການພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການ, ກົມກອງ, ລັດວິສາຫະກິດອ້ອມຂ້າງແຂວງ ແລະ ເລຂາ-ຮອງເລຂາພັກເມືອງ, ພະນັກງານຫຼັກແຫຼ່ງ ພ້ອມດ້ວຍຄະນະກຳມະການເລືອກຕັ້ງຂັ້ນເມືອງທົ່ວແຂວງໄຊຍະບູລີ ເຂົ້າຮ່ວມຫຼາຍກວ່າ 600 ທ່ານ.

ໃນການເຝິກອົບຮົມໄດ້ຮັບຟັງການເຜີຍແຜ່, ເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິຂອງຄະນະປະຈຳພັກແຂວງ ສະບັບເລກທີ 662/ຄພຂ.ຊຍ, ລົງວັນທີ 9 ທັນວາ 2025 ກ່ຽວກັບການເພີ່ມທະວີການນຳພາ-ຊີ້ນຳຂອງອົງຄະນະພັກທຸກຂັ້ນໃນທົ່ວແຂວງ ຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງຊຸດທີ V; ຄຳແນະນຳກ່ຽວກັບການເພີ່ມທະວີການນຳພາແນວຄິດ, ເສີມຂະຫຍາຍສິດປະຊາທິປະໄຕຂອງປວງຊົນລາວບັນດາເຜົ່າເພື່ອການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງ ຊຸດທີ V; ບາງເນື້ອໃນສຳຄັນຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ແຈ້ງການແນະນຳກ່ຽວກັບການສ້າງແຜນງົບປະມານຮັບໃຊ້ການເລືອກຕັ້ງ; ຄຳແນະນຳຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ວ່າດ້ວຍການໂຄສະນາ, ປຸກລະດົມຂະບວນການ ແລະ ຍ້ອງຍໍ ບັ້ນເລືອກຕັ້ງ; ແຜນດຳເນີນງານຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ສະບັບເລກທີ 02/ຄສຂ, ລົງວັນທີ 8 ທັນວາ 2025 ກ່ຽວກັບການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີX ແລະສະພາປະຊາຊົນແຂວງ ຊຸດທີ V; ຄຳແນະນຳຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ສະບັບເລກທີ 05/ຄລຂ, ລົງວັນທີ 17 ທັນວາ 2025 ກ່ຽວກັບການແຕ່ງຕັ້ງອະນຸກຳມະການຂອງຄະນະກຳມະການເລືອກຕັ້ງ ແລະ ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ; ເອກະສານຖາມ-ຕອບ ກ່ຽວກັບການເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນລາວບັນດາເຜົ່າ ໃນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງ ຊຸດທີ V; ເອກະສານ ຖາມ-ຕອບ ກ່ຽວກັບສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງ ຊຸດທີ V; ເອກະສານຖາມ-ຕອບ ກ່ຽວກັບການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ; ຄຳແນະນຳຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ກ່ຽວກັບການນຳພາ-ຊີ້ນຳວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີX ແລະສະພາປະຊາຊົນແຂວງ ຊຸດທີ V.

ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນເສີມຂະຫຍາຍຄວາມຮັບຜິດຊອບ, ສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າ, ປະກອບຄຳຄິດຄຳເຫັນ, ແລກປ່ຽນຕາມຫົວຂໍ້ຕ່າງໆ ໃຫ້ແທດເໝາະກັບຕົວຈິງ ແນໃສ່ສ້າງຄວາມເປັນເອກະພາບທາງດ້ານຫຼັກການ, ທັດສະນະ ແລະ ແນວຄິດ, ກຳຈັດຂໍ້ຂາດຕົກບົກພ່ອງເພື່ອເຮັດໃຫ້ການເລືອກຕັ້ງສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ 7 ຊຸດທີ X ແລະ ສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ V ດຳເນີນໄປດ້ວຍຜົນສຳເລັດຢ່າງຈົບງາມ.

ທ່ານ ເພັງນິລັນ ຄຳພັນເພັງ ກ່າວວ່າ: ການເຝິກອົບຮົມຄັ້ງນີ້ ສຸດທີ່ມີຄວາມໝາຍສຳຄັນເປັນຢ່າງຍິ່ງ ເນື່ອງຈາກວ່າເປັນການເຊື່ອມຊຶມ ທັງເປັນການຈັດຕັ້ງຜັນຂະຫຍາຍບັນດານິຕິກຳຕ່າງໆ ຂອງຄະນະກຳມະການເລືອກຕັ້ງລະດັບຊາດ, ຄະນະກຳມະການເລືອກຕັ້ງຂັ້ນແຂວງ ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈ ໃຫ້ແກ່ການກະກຽມ ແລະ ດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີV. ຜົນສຳເລັດຂອງການເຝິກອົບຮົມຄັ້ງນີ້ແມ່ນໝາກຜົນໃນເບື້ອງຕົ້ນແຫ່ງການຫ້າງຫາກະກຽມບັນດາເງື່ອນໄຂ ແລະ ປະຖົມປັດໄຈພື້ນຖານດ້ານຕ່າງໆ ໃນການກະກຽມໃຫ້ແກ່ການເລືອກຕັ້ງທີ່ຈະໄດ້ດຳເນີນໃນຕໍ່ໜ້າ; ພ້ອມກັນນັ້ນ, ຜົນສຳເລັດດັ່ງກ່າວນີ້ຍັງເປັນການສ່ອງແສງເຖິງຄວາມເປັນເຈົ້າການ, ການປະກອບສ່ວນຢ່າງຕັ້ງໜ້າ ຂອງບັນດາທ່ານຄະນະຮັບຜິດຊອບຂອງແຕ່ລະອະນຸກຳມະການ ນັບທັງຂັ້ນແຂວງ ແລະ ຂັ້ນເມືອງ.

**(ນາງ ອາລິນ ສຸພົມມະປະດິດ)**



# ສສຊ, ສສຂ ພົບປະຜູ້ມີສິດເລືອກຕັ້ງທົ່ວແຂວງສາລະວັນ




(ສພຂ) - ວັນທີ 20-26 ທັນວາຜ່ານມາ, ທ່ານ ສຸບັນ ສະວະບຸດປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 14 ພ້ອມດ້ວຍບັນດາທ່ານ ສສຊ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ ໄດ້ສຳເລັດເຄື່ອນໄຫວໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ສາລະວັນ ຊຸດທີ IV ແລະ ເຜີຍແຜ່ບັນດາເອກະສານວຽກງານກະກຽມໃຫ້ແກ່ການເລືອກຕັ້ງ ສສຊ ຊຸດທີ X, ສສຂ ຊຸດທີ V ທີ່ຈະຈັດຂຶ້ນໃນເດືອນກຸມພາ 2026 ທີ່ຈະມາເຖິງນີ້ ຢູ່ 11 ຈຸດ ຄື: ສະໂມສອນແຂວງ, ເມືອງສາລະວັນ 3 ຈຸດ ເຊິ່ງປະກອບມີ 2 ບ້ານ, 1 ກົມກອງ; ເທດສະບານເມືອງຕະໂອ້ຍ, ເມືອງສະໝ້ວຍ, ເມືອງຕຸ້ມລານ, ເມືອງວາປີ, ເມືອງຄົງເຊໂດນ, ເມືອງເລົ່າງາມ ແລະ ເມືອງລະຄອນເພັງ ມີຜູ້ເຂົ້າຮ່ວມຮັບຟັງ 1,300 ກວ່າທ່ານ.

ໃນການເຄື່ອນໄຫວ, ສສຊ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຊ ຊຸດທີ IX ແລະ ສພຂ ສາລະວັນ ຊຸດທີIV ເຊິ່ງໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ 14 ເນື້ອໃນ ແລະ ຮັບຮອງອອກເປັນມະຕິ 8 ສະບັບ; ພ້ອມນັ້ນ, ທ່ານ ສສຂ ຍັງໄດ້ເຜີຍແຜ່ບັນດາເນື້ອໃນທີ່ໄດ້ພິຈາລະນາແລະຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຂ ສາລະວັນ ຊຸດທີIV ເຊິ່ງໄດ້ພິຈາລະນາ 12 ບັນຫາ ແລະ ໄດ້ອອກເປັນມະຕິສະພາປະຊາຊົນແຂວງ 8 ສະບັບ ຮັບຮອງເອົາ: 1). ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ 5 ປີ 2021-2025 ແລະ ທິດທາງແຜນການປະຈຳປີ 2026; 2). ບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໃນໄລຍະ 5 ປີ 2021-2025 ແລະ ທິດທາງຕໍ່ໜ້າ; 3). ບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະ 5 ປີ 2021-2025 ແລະ ທິດທາງຕໍ່ໜ້າ; 4). ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ 2021-2025, ປະຈຳປີ 2025 ແລະ ທິດທາງແຜນການປະຈຳປີ 2026; ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງປະຈຳປີ 2024 ຂອງອົງການກວດສອບປະຈຳພາກໃຕ້; 5). ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ 2021-2025, ປະຈຳປີ 2025 ແລະ ທິດທາງແຜນການປະຈຳປີ 2026; ບົດລາຍງານຜົນການກວດກາຕາມຜົນການກວດສອບ ປີ 2023 ຂອງອົງການກວດກາລັດແຂວງ; 6). ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ 2021-2025, ປະຈຳປີ 2025 ແລະ ທິດທາງແຜນການປະຈຳປີ 2026 ຂອງສານປະຊາຊົນແຂວງ; 7). ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ 2021-2025, ປະຈຳປີ 2025 ແລະ ທິດທາງແຜນການປະຈຳປີ 2026 ອົງການໄອຍະການປະຊາຊົນແຂວງ; 8.) ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ 2021-2025, ປະຈຳປີ 2025 ແລະ ວຽກງານຈຸດສຸມຮອດກອງປະຊຸມຄັ້ງປະຖົມມະລຶກຂອງ ສພຂ ຊຸດທີ V ແລະ ທິດທາງແຜນການປະຈຳປີ 2026.

ພ້ອມກັນນັ້ນ, ກໍໄດ້ເປີດໂອກາດໃຫ້ຜູ້ເຂົ້າຮ່ວມໄດ້ແລກປ່ຽນ, ປະກອບຄຳຄິດຄຳເຫັນ, ສະເໜີບັນຫາທີ່ມີຄວາມສົນໃຈ ແລະ ຂັດຂ້ອງໝອງໃຈເຊິ່ງບາງບັນຫາກໍໄດ້ອະທິບາຍຊີ້ແຈງກັບທີ່, ສຳລັບບັນຫາທີ່ຕິດພັນກັບຫຼາຍພາກສ່ວນ ຈະນຳໄປສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ພິຈາລະນາ ແລ້ວກ້າວໄປສູ່ການຈັດຕັ້ງປະຕິບັດໃຫ້ເກີດຜົນເປັນຈິງ.

**(ຈັນທີ ດວງປັນຍາ)**



# ຕິດຕາມກວດກາ ແລະ ຊຸກຍູ້ ການປະຕິບັດໂຄງການຂຸດຄົ້ນແຮ່ຊືນ




(ສພຊ)-ວັນທີ 27 ທັນວາຜ່ານມາ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 17 ແລະ ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ ພ້ອມດ້ວຍຂະແໜງການທີ່ກ່ຽວຂ້ອງ ນຳໂດຍທ່ານ ນາງ ມີນາພອນ ໄຊສົມພູ ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 17, ປະທານສະພາປະຊາຊົນແຂວງ ແລະ ທ່ານ ມະນີໂສ ຊາມຸນຕີ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານຂອງບໍລິສັດ ນິແລນ ລາວ ມາຍນິງ ຈຳກັດ ຢູ່ເມືອງຊານໄຊ ແຂວງອັດຕະປື.

ໃນການເຄື່ອນໄຫວ, ໄດ້ຮັບຟັງການລາຍງານສະພາບການດຳເນີນງານຂອງບໍລິສັດໃນໄລຍະຜ່ານມາ, ໜ້າວຽກປັດຈຸບັນ ແລະ ທິດທາງແຜນການໃນຕໍ່ໜ້າ ພ້ອມທັງສົນທະນາແລກປ່ຽນກ່ຽວກັບບາງບັນຫາທີ່ມີຄວາມສົນໃຈໂດຍສະເພາະດ້ານເນື້ອທີ່ຂອບເຂດການສຳປະທານ, ດ້ານສິ່ງແວດລ້ອມ ແລະ ສັງຄົມ, ການຟື້ນຟູປ່າໄມ້ ແລະ ປູກໄມ້ທົດແທນ, ການຈັດຕັ້ງປະຕິບັດບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ຕິດພັນກັບໂຄງການ ໂດຍຊອກໃຫ້ໄດ້ບັນດາຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຂໍ້ຄົງຄ້າງ ທີ່ຈະຕ້ອງສືບຕໍ່ປັບປຸງແກ້ໄຂ ເພື່ອຮັບປະກັນໃຫ້ໂຄງການດຳເນີນໄປດ້ວຍຄວາມຖືກຕ້ອງຕາມຂັ້ນຕອນຕາມການອະນຸຍາດຂອງລັດຖະບານ ບົນພື້ນຖານລະບຽບກົດໝາຍ.

ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 17 ໄດ້ມີຄຳເຫັນສະແດງຄວາມຊົມເຊີຍຕໍ່ກັບການລາຍງານຂອງຂະແໜງການທີ່ກ່ຽວຂ້ອງ ເຊິ່ງໂຄງການຂຸດຄົ້ນແຮ່ຊືນຂອງບໍລິສັດ ແມ່ນຢູ່ໃນໄລຍະຂັ້ນຕອນຄົ້ນຄວ້າ, ພິຈາລະນາ ໃນການຫັນປ່ຽນທີ່ດິນປ່າໄມ້ ເພື່ອການພັດທະນາຂອງໂຄງການ; ສະນັ້ນ, ສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງ ສືບຕໍ່ເອົາໃຈໃສ່ປະສານງານປັບປຸງເອກະສານໃຫ້ລະອຽດຄົບຖ້ວນໄປຕາມຂັ້ນຕອນລະບຽບກົດໝາຍ ໃຫ້ມີຄວາມເປັນເອກະພາບ, ຢັ້ງຢືນຄືນພື້ນທີ່ນອນໃນເຂດສຳປະທານ, ກວດກາດ້ານເຕັກນິກດ້ານສິ່ງແວດລ້ອມ, ຄຸ້ມຄອງລະບົບນ້ຳເສຍທີ່ຈະລົງໃສ່ຄອງນ້ຳ ແລະ ໃຫ້ບໍລິສັດເປັນເຈົ້າການມີສ່ວນຮ່ວມພົວພັນປະສານງານກັບທ້ອງຖິ່ນ ໃຫ້ຮັດກຸມ ແລະ ຊັດເຈນ ທັງມີວິຊາການຈາກຂະແໜງການທີ່ກ່ຽວຂ້ອງ ປະຈຳພາກສະໜາມ ໃນການຕິດຕາມຕົວຈິງ.

ຈາກນັ້ນ, ຄະນະຍັງໄດ້ລົງຕິດຕາມເບິ່ງພື້ນທີ່ຕົວຈິງຂອງໂຄງການອີກດ້ວຍ.

**(ວິນັດ ສີສຸລາດ)**



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 2118 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 26 ທັນວາ 2025

**ແຈ້ງການ**

ຮຽນ: - ບັນດາທ່ານ ລັດຖະມົນຕີ ແລະ ຫົວໜ້າອົງການລັດທຽບເທົ່າ ທີ່ນັບຖື.
- ທ່ານ ປະທານຄະນະກຳມະການປົກຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ປະທານຄະນະກຳມະການປົກຄອງແຂວງ ໃນຂອບເຂດທົ່ວປະເທດ ທີ່ນັບຖື.
- ບັນດາທ່ານ ປະທານ/ຫົວໜ້າອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ທີ່ນັບຖື.

ເລື່ອງ: ການກຳນົດ ວັນພັກທາງລັດຖະການ ແລະ ວັນພັກຊົດເຊີຍ ປະຈຳປີ 2026.

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 547/ນຍ, ລົງວັນທີ 26 ສິງຫາ 2025;
- ອີງຕາມ ດຳລັດ ວ່າດ້ວຍວັນພັກ ສະບັບເລກທີ 386/ລບ, ລົງວັນທີ 15 ທັນວາ 2017;
- ອີງຕາມ ແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1038/ຫສນຍ, ລົງວັນທີ 19 ກໍລະກົດ 2017.
- ອີງຕາມ ການຕົກລົງ ຂອງທ່ານ ນາຍົກລັດຖະມົນຕີ ຄັ້ງວັນທີ 22 ທັນວາ 2025.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຕົກລົງ ຂອງທ່ານ ນາຍົກລັດຖະມົນຕີ ມາຍັງທ່ານຊາບ ດັ່ງນີ້: ເພື່ອໃຫ້ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ ແລະ ເປັນບ່ອນອີງໃນການສ້າງແຜນເຄື່ອນໄຫວວຽກງານຂອງບັນດາ ກະຊວງ, ອົງການຕ່າງໆ ຂອງສູນກາງ ແລະ ທ້ອງຖິ່ນ ຈຶ່ງໄດ້ກຳນົດກ່ຽວກັບ ວັນພັກທາງລັດຖະການ ແລະ ວັນພັກຊົດເຊີຍ ປະຈຳປີ 2026, ຊຶ່ງມີລາຍລະອຽດ ດັ່ງນີ້:

1. ວັນທີ 01 ມັງກອນ 2026 ພັກວັນປີໃໝ່ສາກົນ (ກົງກັບວັນພະຫັດ);
2. ວັນທີ 08 ມີນາ 2026 ພັກວັນແມ່ຍິງສາກົນ, ແຕ່ເນື່ອງຈາກວ່າ ວັນທີ 08 ມີນາ 2026 ກົງກັບມື້ວັນພັກປະຈຳອາທິດ (ວັນອາທິດ), ຈຶ່ງກຳນົດເອົາວັນທີ 09 ມີນາ 2026 (ກົງກັບວັນຈັນ) ເປັນວັນພັກຊົດເຊີຍ ວັນແມ່ຍິງສາກົນ;
3. ວັນທີ 14-16 ເມສາ 2026 ພັກບຸນປີໃໝ່ລາວ (ກົງກັບວັນ ອັງຄານ, ວັນພຸດ ແລະ ວັນພະຫັດ);
4. ວັນທີ 01 ພຶດສະພາ 2026 ພັກວັນກຳມະກອນສາກົນ (ກົງກັບວັນສຸກ);
5. ວັນທີ 20 ກໍລະກົດ 2026 ພັກວັນສ້າງຕັ້ງສະຫະພັນແມ່ຍິງລາວ (ກົງກັບວັນຈັນ) ເປັນວັນພັກທາງລັດຖະການ ສະເພາະພະນັກງານ-ລັດຖະກອນ ແລະ ກຳມະກອນ ເພດຍິງ;
6. ວັນທີ 02 ທັນວາ 2026 ພັກວັນສະຖາປະນາ ສປປ ລາວ (ກົງກັບວັນພຸດ).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດ ຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ບົວຄົງ ນາມມະວົງ

ບ່ອນນຳສົ່ງ:
1. ທ່ານ ນາຍົກ-ຮອງນາຍົກລັດຖະມົນຕີ 05 ສະບັບ
2. ທ່ານ ຫົວໜ້າຫ້ອງວ່າການສູນກາງພັກ 01 ສະບັບ
3. ທ່ານ ຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ 01 ສະບັບ
4. ທ່ານ ຫົວໜ້າຫ້ອງວ່າການສະພາແຫ່ງຊາດ 01 ສະບັບ
5. ຄະນະ ຫສນຍ ທຸກທ່ານ 01 ສະບັບ
6. ສຳເນົາ 01 ສະບັບ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ກົມເລຂາ, ພະແນກເລຂາ 2, SV.

# ຫາລືການປະມວນເອກະສານ ການເຄື່ອນໄຫວວຽກງານຕ່າງປະເທດ



(ສພຊ)-ວັນທີ 26-27 ທັນວານີ້ ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ, ກົມພົວພັນລັດຖະສະພາສອງຝ່າຍ ຮ່ວມກັບກົມພົວພັນລັດຖະສະພາຫຼາຍຝ່າຍ ທີ່ເປັນເສນາທິການໃຫ້ແກ່ກຳມາທິການການຕ່າງປະເທດ ໄດ້ຈັດກອງປະຊຸມປຶກສາຫາລືການປະມວນບັນດາເອກະສານທາງການ ໃນການເຄື່ອນໄຫວວຽກງານການຕ່າງປະເທດຂອງສະພາແຫ່ງຊາດ ຊຸດທີ IX (2021-2025) ໂດຍການເປັນປະທານຂອງທ່ານເພັດລາທັນທະວົງສາ ຫົວໜ້າກົມພົວພັນລັດຖະສະພາສອງຝ່າຍ ເຊິ່ງມີຄະນະກົມ, ຄະນະພະແນກ ແລະ ພະນັກງານຫຼັກແຫຼ່ງຂອງສອງກົມດັ່ງກ່າວ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້ ກໍເພື່ອຄົ້ນຄວ້າ, ປຶກສາຫາລື, ລະດົມແນວຄວາມຄິດ ແລະ ປະກອບຄຳເຫັນດ້ານເນື້ອໃນ ໃສ່ປຶ້ມປະມວນເອກະສານທາງການຂອງການເຄື່ອນໄຫວວຽກງານການຕ່າງປະເທດຂອງສະພາແຫ່ງຊາດຊຸດທີIX, ການປະມວນບັນດາເອກະສານໃນການເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45, ກອງປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ ໃຫ້ມີຄວາມຄົບຖ້ວນ, ສອດຄ່ອງ ແລະ ເປັນບ່ອນອີງທີ່ໜັກແໜ້ນດ້ານທິດສະດີແລະພຶດຕິກຳ ໃນການຈັດຕັ້ງຜັນຂະຫຍາຍການເຄື່ອນໄຫວວຽກງານການຕ່າງປະເທດຂອງສະພາແຫ່ງຊາດແຫ່ງສປປ ລາວ; ສ້າງໃຫ້ເປັນຄູ່ມືປະມວນບັນດາເອກະສານທີ່ນຳໃຊ້ຕົວຈິງ ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງກຳມາທິການການຕ່າງປະເທດ ທີ່ຖືກຕ້ອງ, ເປັນເອກະພາບ ແລະ ທັນເວລາ ພ້ອມທັງນຳໄປເຜີຍແຜ່ໃຫ້ພະນັກງານວິຊາການຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ມວນຊົນ ໄດ້ຮັບຊາບ, ສຶກສາຄົ້ນຄ້ວາ.

ໄລຍະດຳເນີນກອງປະຊຸມ, ຜູ້ເຂົ້າຮ່ວມ ໄດ້ຄົ້ນຄວ້າ, ປະກອບຄຳຄິດເຫັນ, ສົນທະນາ ແລະ ແລກປ່ຽນປະສົບການ ແລະ ບົດຮຽນ ຕໍ່ບັນດາເນື້ອໃນ, ສາລະບານ, ໜ້າປົກ ແລະ ຮູບພາບຂອງບັນດາປຶ້ມທີ່ວິທະຍາກອນໄດ້ນຳມາສະເໜີ ຢ່າງມີຈຸດສຸມ, ກົງໄປກົງມາ ແລະ ເປັນຂະບວນຟົດຟື້ນ.

ໃນຕອນທ້າຍ, ປະທານກອງປະຊຸມ ໄດ້ຕີລາຄາສູງຕໍ່ກອງປະຊຸມໃນຄັ້ງນີ້ ແມ່ນມີຄວາມໝາຍສຳຄັນ ແລະ ເປັນຜົນປະໂຫຍດໃນການເຄື່ອນໄຫວວຽກງານການຕ່າງປະເທດຂອງສະພາແຫ່ງຊາດ ແລະ ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ບັນດາຜູ້ແທນກອງປະຊຸມທີ່ໄດ້ປະກອບສ່ວນຄຳຄິດຄຳເຫັນອັນລ້ຳຄ່າເຊິ່ງໄດ້ສ່ອງແສງໃຫ້ເຫັນເຖິງຜົນສຳເລັດອັນໃຫຍ່ຫຼວງໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ໃນການເຄື່ອນໄຫວວຽກງານຂອງກຳມາທິການການຕ່າງປະເທດ ໂດຍຕິດພັນກັບການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍການຕ່າງປະເທດຂອງພັກ, ລະບຽບກົດໝາຍຂອງລັດ ແລະ ການເຄື່ອນໄຫວວຽກງານຕົວຈິງຂອງສະພາແຫ່ງຊາດໃນແຕ່ລະໄລຍະ; ພ້ອມກັນນີ້, ການສ້າງປຶ້ມປະມວນບັນດາເອກະສານທາງການເຫຼັ້ມນີ້ຍັງໄດ້ເປັນຖານຂໍ້ມູນໃນການຄົ້ນຄວ້າ, ຂໍ້ມູນອ້າງອີງທີ່ສຳຄັນໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ພະນັກງານ-ລັດຖະກອນ ຂອງກຳມາທິການການຕ່າງປະເທດ ເວົ້າສະເພາະ, ເວົ້າລວມ ກໍຄືສະພາແຫ່ງຊາດ ໃນຕໍ່ໜ້າອີກດ້ວຍ.

# ຜົນງານພົ້ນເດັ່ນຂອງສະພາແຫ່ງຊາດ ຊຸດທີ IX (2021-2025)


ການປະຕິບັດພາລະບົດບາດ ດ້ານນິຕິບັນຍັດ

**ການປະຕິບັດພາລະບົດບາດດ້ານນິຕິບັນຍັດ:**

ປີ 2023 ສະພາແຫ່ງຊາດ ໄດ້ພິຈາລະນາ, ຮັບຮອງເອົາບັນດາກົດໝາຍ ຈຳນວນທັງໝົດ 17 ສະບັບ, ໃນນີ້:

- ກົດໝາຍສ້າງໃໝ່ 5 ສະບັບ ຄື: 1. ກົດໝາຍວ່າດ້ວຍອາກອນທີ່ດິນ, 2. ກົດໝາຍວ່າດ້ວຍການຈັດຫາງານ, 3. ກົດໝາຍວ່າດ້ວຍ

ວຽກງານສາທາລະນະສຸກ, 4. ກົດໝາຍວ່າດ້ວຍການຮັກສາສຸຂະພາບຂັ້ນຕົ້ນ, 5. ກົດໝາຍວ່າດ້ວຍເຍົາວະຊົນລາວ;

- ກົດໝາຍປັບປຸງ 12 ສະບັບ ຄື: 1. ກົດໝາຍວ່າດ້ວຍການພິມຈຳໜ່າຍ, 2. ກົດໝາຍວ່າດ້ວຍຊັບສິນທາງປັນຍາ, 3. ກົດໝາຍວ່າດ້ວຍສັດປ່າ, 4. ກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ, 5. ກົດໝາຍວ່າດ້ວຍສານທະຫານ, 6. ກົດໝາຍວ່າດ້ວຍການປົກປ້ອງສິດແລະຜົນປະໂຫຍດຂອງເດັກ, 7. ກົດໝາຍວ່າດ້ວຍການປິ່ນປົວ, 8. ກົດໝາຍວ່າດ້ວຍທະນາຄານທຸລະກິດ, 9. ກົດໝາຍວ່າດ້ວຍລະບົບຊຳລະ, 10. ກົດໝາຍວ່າດ້ວຍການບັນຊີ, 11. ກົດໝາຍວ່າດ້ວຍຜູ້ພິພາກສາ, 12. ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

ສະພາແຫ່ງຊາດ ໄດ້ຈັດປະເມີນການປະຕິບັດກົດໝາຍຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ກົດໝາຍຂົງເຂດຍຸຕິທຳ ແລະ ກົດໝາຍຂົງເຂດສະພາແຫ່ງຊາດ ຈຳນວນ 11 ສະບັບ; ຄົ້ນຄວ້າການຕີຄວາມໝາຍແລະອະທິບາຍກົດໝາຍ ໄດ້ຈຳນວນ 3 ຫົວຂໍ້ ຄື: ຄຳວ່າ: "ພະນັກງານ" ຕາມປະມວນກົດໝາຍອາຍາ, "ພາກສ່ວນກ່ຽວຂ້ອງ" ຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ, "ໂຮງແຮມ ແລະ ການບັນເທີງ" ຕາມດຳລັດຂອງລັດຖະບານ; ຈັດຕັ້ງການໂຄສະນາເຜີຍແຜ່ກົດໝາຍທີ່ຕິດພັນກັບບັນຫາເຄັ່ງຮ້ອນຂອງສັງຄົມ ຜ່ານສື່ມວນຊົນຂອງສະພາແຫ່ງຊາດ ເພື່ອເຮັດໃຫ້ສັງຄົມຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ; ລົງໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍ ຢູ່ບັນດາກະຊວງ, ອົງການ; ຄົ້ນຄວ້າຕີຄວາມໝາຍ ແລະ ອະທິບາຍກົດໝາຍ ໄດ້ຈຳນວນ 3 ຫົວຂໍ້ ທີ່ພົວພັນກັບກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍວ່າດ້ວຍຄອບຄົວ; ໃຫ້ສັດຕະຍາບັນແກ່ສົນທິສັນຍາ-ສັນຍາສາກົນ ແລະ ອະນຸສັນຍາທີ່ ສປປລາວ ເປັນພາຄີ ຈຳນວນ 7 ສະບັບ; ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳຂອງສະພາແຫ່ງຊາດ ຈຳນວນ 14 ສະບັບ ເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ.

ນອກນັ້ນ, ໄດ້ຈັດພິທີໂຮມຊຸມນຸມສະເຫຼີມສະຫຼອງວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 30 ປີ ຢ່າງຄຶກຄື້ນ ຢູ່ນະຄອນຫຼວງວຽງຈັນ ໂດຍມີການເຂົ້າຮ່ວມຂອງການນຳຂັ້ນສູງພັກ-ລັດ, ອະດີດການນຳພັກ-ລັດ, ຕາງໜ້າຊາວນະຄອນຫຼວງວຽງຈັນແລະ ມີຜູ້ຊົມທີ່ຕິດຕາມຢູ່ທາງບ້ານ ເປັນຈຳນວນ 1.3 ລ້ານກວ່າຄົນ ແນໃສ່ເປັນການປຸກລະດົມ, ຂົນຂວາຍໃຫ້ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າຮັບຮູ້ເຂົ້າໃຈກ່ຽວກັບລັດຖະທຳມະນູນ, ກົດໝາຍ ທັງເປັນການສ້າງສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ນັບມື້ສູງຂຶ້ນ; ຈັດຝຶກອົບຮົມສຳມະນາໃນຫົວຂໍ້ຕ່າງໆ ໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ພະນັກງານ-ລັດຖະກອນ ທັງສູນກາງ ແລະ ທ້ອງຖິ່ນ ໄດ້ຈຳນວນ 32 ຄັ້ງ; ລົງເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ II ຕິດພັນກັບການລົງພົບປະປະຊາຊົນຜູ້ມີສິດເລືອກຕັ້ງໃນຂອບເຂດທົ່ວປະເທດ ໄດ້ທັງໝົດ 1,191 ຈຸດ, ມີຜູ້ເຂົ້າຮ່ວມທັງໝົດ125,162 ຄົນ, ຍິງ 5,968 ຄົນ; ໄດ້ລະດົມການຊ່ວຍເຫຼືອທາງດ້ານທຶນຮອນແລະວັດຖຸເຄື່ອງໃຊ້ຕ່າງໆ ເພື່ອນຳໄປຊ່ວຍເຫຼືອປະຊາຊົນຜູ້ທຸກຍາກ ເປັນມູນຄ່າທັງໝົດ 1,026,747,000 ກີບ.

**ການປະຕິບັດພາລະບົດບາດດຳດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ:**

ປີ 2023 ສະພາແຫ່ງຊາດໄດ້ຄົ້ນຄວ້າພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມລັດຖະທຳມະນູນ ແລະ ກົດໝາຍ ໂດຍຜ່ານການດຳເນີນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ແລະ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ດັ່ງນີ້:

- ພິຈາລະນາ, ຮັບຮອງເອົາບັນດາຫົວຂໍ້ເນື້ອໃນຢູ່ກອງປະຊຸມສະໄໝສາມັນເທື່ອທີ 5 ແລະ ເທື່ອທີ 6 ຂອງສະພາແຫ່ງຊາດ ໄດ້ທັງໝົດຈຳນວນ 35 ເນື້ອໃນ ແລະ ອອກເປັນມະຕິກອງປະຊຸມສະພາແຫ່ງຊາດ ຈຳນວນ 36 ສະບັບ ໃນນີ້, ວຽກງານສະພາແຫ່ງຊາດ 2 ສະບັບ, ວຽກງານລັດຖະບານ10ສະບັບ, ວຽກງານອົງການໄອຍະການປະຊາຊົນສູງສຸດ ແລະ ສານປະຊາຊົນສູງສຸດ 4 ສະບັບ, ວຽກງານອົງການກວດສອບແຫ່ງລັດແລະອົງການກວດກາແຫ່ງລັດ 2 ສະບັບ, ວຽກງານສ້າງ ແລະ ປັບປຸງກົດໝາຍ 18 ສະບັບ.

- ພິຈາລະນາ, ຮັບຮອງເອົາບັນດາຫົວຂໍ້ເນື້ອໃນຢູ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ໄດ້ທັງໝົດຈຳນວນ 159 ເນື້ອໃນ ແລະ ອອກເປັນມະຕິຄະນະປະຈຳສະພາແຫ່ງຊາດ ຈຳນວນ 110 ສະບັບ ໃນນີ້, ພົວພັນກັບວຽກງານສະພາແຫ່ງຊາດ 6 ສະບັບ, ວຽກງານລັດຖະບານ 15 ສະບັບ, ວຽກງານສານປະຊາຊົນສູງສຸດ 87 ສະບັບ ແລະ ວຽກງານອົງການກວດສອບແຫ່ງລັດ 2 ສະບັບ.

ນອກນັ້ນ, ຍັງໄດ້ດຳເນີນການເລືອກຕັ້ງແທນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 17 ແຂວງອັດຕະປື ແລະ ແນະນຳການເລືອກຕັ້ງແທນສະມາຊິກສະພາປະຊາຊົນ3ແຂວງ ຄື: ແຂວງຫຼວງພະບາງ, ແຂວງສະຫວັນນະເຂດ ແລະ ແຂວງຈຳປາສັກ.

**ການປະຕິບັດພາລະບົດບາດດ້ານການຕິດຕາມກວດກາ:**

ປີ 2023 ສະພາແຫ່ງຊາດ ປະຕິບັດພາລະບົດບາດຕິດຕາມກວດກາ ໄດ້ທັງໝົດຈຳນວນ 32 ຄັ້ງ ເຊິ່ງກວມເອົາຫົວຂໍ້ພົ້ນເດັ່ນທີ່ພົວພັນກັບການປະຕິບັດລັດຖະທຳມະນູນແລະກົດໝາຍ, ການຜັນຂະຫຍາຍເນື້ອໃນກົດໝາຍ ທີ່ເປັນນິຕິກຳໃຕ້ກົດໝາຍ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຕິດພັນກັບຄວາມຄືບໜ້າໃນການປະຕິບັດສອງວາລະແຫ່ງຊາດ, ການຊົດເຊີຍຜົນກະທົບຈາກການລົງທຶນຂອງລັດ ແລະ ວຽກງານອື່ນ. ພ້ອມກັນນັ້ນ, ດຳເນີນກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດກັບລັດຖະບານ 2 ຄັ້ງ ເຊິ່ງໄດ້ພິຈາລະນາເນື້ອໃນຈຳນວນ 15 ຫົວຂໍ້; ດຳເນີນກອງປະຊຸມຮ່ວມກັບສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ.

ສະພາແຫ່ງຊາດ ໄດ້ຮັບຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ລວມທັງຄ້າງມາມີທັງໝົດຈຳນວນ951 ເລື່ອງ, ສາມາດພິຈາລະນາ ແລະ ສົ່ງໃຫ້ພາກສ່ວນຕ່າງໆ ໄດ້ຈຳນວນ 441 ເລື່ອງ, ຮັບຕ້ອນແລະໃຫ້ຄຳປຶກສາແກ່ປະຊາຊົນໄດ້ຈຳນວນ 225 ຄັ້ງ; ສັງລວມຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ຈຳນວນ 1,509 ສາຍ ແລະ ສາມາດສັງລວມເອົາບັນຫາເນື້ອໃນຕ່າງໆ ໄດ້ຈຳນວນ 767 ເນື້ອໃນ ສົ່ງໃຫ້ພາກສ່ວນກ່ຽວຂ້ອງພິຈາລະນາແກ້ໄຂ ຈຳນວນ 63 ພາກສ່ວນ, ກະຊວງ-ອົງການໃຫ້ການຊີ້ແຈງຕໍ່ຄຳຊັກຖາມຢູ່ກອງປະຊຸມສະພາແຫ່ງຊາດ ຈຳນວນ 38 ຄຳຖາມ ເຊິ່ງບັນດາເນື້ອໃນພົ້ນເດັ່ນແມ່ນບັນຫາການເໜັງຕີງຂອງສິນຄ້າ, ອັດຕາແລກປ່ຽນ, ການຜະລິດສິນຄ້າທົດແທນການນຳເຂົ້າ.


ການປະຕິບັດພາລະບົດບາດ ດ້ານການຕິດຕາມກວດກາ


ການປະຕິບັດພາລະບົດບາດ ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ

# ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາປະຊາຊົນແຂວງຫຼວງພະບາງ ຊຸດທີ IV



(ສພຂ) - ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາປະຊາຊົນແຂວງຊຸດທີIV ໄດ້ດຳເນີນມາເປັນເວລາ 2 ວັນເຕັມ ດ້ວຍບັນຍາກາດແຫ່ງການເສີມຂະຫຍາຍສິດປະຊາທິປະໄຕໃນການລາຍງານ, ການຊີ້ແຈງ, ຊັກຖາມ ແລະ ປະກອບຄຳຄິດຄຳເຫັນ ຕໍ່ກັບວຽກງານຕ່າງໆຂອງແຂວງ, ມາຮອດເວລານີ້, ກອງປະຊຸມ ໄດ້ສຳເລັດຕາມລະດັບຄາດໝາຍທີ່ວາງໄວ້, ການດຳເນີນຕາມວາລະກອງປະຊຸມຕະຫຼອດ 2 ວັນທີ່ຜ່ານມາ, ບັນດາທ່ານສະມາຊິກສະພາແຫ່ງຊາດຊຸດທີIXປະຈຳເຂດເລືອກຕັ້ງທີ 6 ແລະ ສະມາຊິກສະພາປະຊາຊົນແຂວງ ຊຸດທີ IV, ໄດ້ພ້ອມກັນຍົກສູງຄວາມຮັບຜິດຊອບດ້ານການເມືອງ ໄດ້ສຸມທຸກສະຕິປັນຍາ, ເຫື່ອແຮງ ແລະ ຄວາມຮູ້, ຄວາມສາມາດ ເພື່ອຮັບຟັງການລາຍງານ, ປະກອບຄຳເຫັນ ພ້ອມທັງ ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງ ເອົາບັນຫາສຳຄັນຂອງແຂວງ ດ້ວຍຄວາມເປັນເອກະພາບສູງ, ເຊິ່ງສະແດງອອກໃນການຮັບຮອງເອົາບັນຫາຕ່າງໆ ດ້ວຍຄະແນນສຽງເຫັນດີ 96 ກວ່າເປີເຊັນຂຶ້ນໄປ.

ກອງປະຊຸມຄັ້ງນີ້, ໄດ້ສຸມໃສ່ຄົ້ນຄວ້າ,ພິຈາລະນາແລະຮັບຮອງ ເອົາບັນດາວຽກງານສຳຄັນພື້ນຖານຂອງແຂວງ ຫຼາຍບັນຫາຄື: ກອງປະຊຸມໄດ້ຮັບຮອງໂຄງປະກອບກົງຈັກການຈັດຕັ້ງ ຂອງຄະນະກຳມະການປົກຄອງແຂວງ ເຊິ່ງໄດ້ຮັບຮອງເອົາ 17 ພາກສ່ວນດັ່ງນີ້: ຫ້ອງວ່າການແຂວງ, ກອງບັນຊາການທະຫານແຂວງ,ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ອົງການກວດກາລັດແຂວງ, ພະແນກການເງິນແຂວງ,ພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ພະແນກ ອຸດສາຫະກຳ ແລະ ການຄ້າແຂວງ, ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ, ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ, ພະແນກສາທາລະນະສຸກແຂວງ, ພະແນກສຶກສາທິການ ແລະ ກິລາແຂວງ, ພະແນກ ວັດທະນະທຳແລະການທ່ອງທ່ຽວແຂວງ, ພະແນກແຮງງານແລະສະຫວັດດີການສັງຄົມແຂວງ, ພະແນກຍຸຕິທຳ, ພະແນກການຕ່າງປະເທດ, ອົງການກາແດງແຂວງ ແລະຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນແຂວງ;ຮັບຮອງເອົາການສະເໜີແຕ່ງຕັ້ງ ທ່ານ ປອ ບຸນເຫຼືອສິນໄຊວໍຣະວົງ ຮອງເລຂາຄະນະບໍລິຫານງານພັກແຂວງ, ເປັນປະທານຄະນະກຳມະການປົກຄອງແຂວງ ແລະ ໄດ້ຮັບຮອງເອົາການສະເໜີແຕ່ງຕັ້ງ ທ່ານນາງ ວຽນວິໄລ ດີລະພັນ ຄະນະປະຈຳພັກແຂວງ ແລະ ທ່ານ ຈິນດາວົງ ໂພສີຄຳ ຄະນະປະຈຳພັກແຂວງ ເປັນຮອງປະທານ ຄະນະກຳມະການປົກຄອງແຂວງ; ກອງປະຊຸມໄດ້ຮັບຮອງບົດລາຍງານການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານຂອງແຂວງ ປະຈຳປີ 2025 ແລະ ທິດທາງແຜນການປະຈຳປີ 2026; ຕໍ່ກັບ ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງກອງປະຊຸມໄດ້ຕີລາຄາສູງ ຕໍ່ການຈັດຕັ້ງປະຕິບັດວຽກງານຂອງຄະນະກຳມະການປົກຄອງແຂວງ ທີ່ໄດ້ສູ້ຊົນເຮັດໃຫ້ເສດຖະກິດ ມີການຂະຫຍາຍຕົວບັນລຸຕາມແຜນໃນລະດັບ 6,1 %, ຄິດເປັນມູນຄ່າ ລວມຍອດຜະລິດຕະພັນພາຍໃນ ບັນລຸ 20 ພັນຕື້ກວ່າກີບ, ສະເລ່ຍລາຍຮັບຕໍ່ຫົວຄົນ 42 ລ້ານກວ່າກີບ; ເຊິ່ງຂະແໜງການຕົ້ນຕໍ ທີ່ຊຸກຍູ້ໃຫ້ເສດຖະກິດຂະຫຍາຍຕົວ ແມ່ນຂະແໜງ ການບໍລິການທ່ອງທ່ຽວ, ຂະແໜງກະສິກຳ ແລະ ຂະແໜງ ອຸດສາຫະກຳ-ຫັດຖະກຳ; ກອງປະຊຸມໄດ້ສະເໜີ ໃຫ້ຄະນະກຳມະການປົກຄອງແຂວງສືບຕໍ່ຊຸກຍູ້ການຈັດຕັ້ງປະຕິບັດບັນດາວຽກງານຈຸດສຸມຕ່າງໆໃຫ້ສຳເລັດຕາມແຜນການທີ່ວາງໄວ້, ເພີ່ມທະວີວຽກງານຊຸກຍູ້ ແລະສົ່ງເສີມການລົງທຶນທັງພາຍໃນ ແລະ ຕ່າງປະເທດ, ບູລະນະ ແລະ ສ້ອມແປງເສັ້ນທາງ, ຊຸກຍູ້ການຜະລິດກະສິກຳແລະການທ່ອງທ່ຽວ ເພື່ອຕອບສະໜອງໃຫ້ການບໍລິໂພກ, ອຸປະໂພກພາຍໃນແຂວງ, ໄປພ້ອມໆກັບການຊຸກຍູ້ໃຫ້ອົງການທີ່ກ່ຽວຂ້ອງ ສຸມໃສ່ການສຳຫຼວດ ແລະ ວັດແທກໃບຕາດິນ ໃຫ້ບັນລຸຕາມແຜນການທີ່ວາງໄວ້;

ການຈັດຕັ້ງປະຕິບັດແຜນງົບປະມານ ຂອງແຂວງມີຜົນງານທີ່ພົ້ນເດັ່ນ ສາມາດເກັບລາຍຮັບໄດ້ 1,473 ຕື້ກວ່າກີບ, ລື່ນແຜນການ 19,5 ເປີເຊັນ; ສຳລັບດ້ານລາຍຈ່າຍ ແມ່ນປະຕິບັດໄດ້ 70 ກ່ວາເປີເຊັນຂອງແຜນການປີ; ກອງປະຊຸມໄດ້ສະເໜີໃຫ້ຄະນະກຳມະການປົກຄອງແຂວງ ສຸມໃສ່ໃນການແກ້ໄຂບັນຫາໜີ້ສິນຂອງລັດ ແລະ ສືບຕໍ່ນຳໃຊ້ເຄື່ອງມືທີ່ທັນສະໄໝເຂົ້າໃນການຈັດເກັບລາຍຮັບເຂົ້າງົບປະມານຂອງລັດ ໃຫ້ມີຄວາມຊັດເຈນ ເພື່ອຫຼີກເວັ້ນການຮົ່ວໄຫຼຂອງງົບປະມານ; ໄດ້ຮັບຮອງບົດລາຍງານ ການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2025 ແລະ ທິດທາງແຜນການ ປະຈຳປີ 2026 ຂອງອົງການກວດສອບ ປະຈຳພາກເໜືອ 1 ແລະ ບົດລາຍງານຜົນການກວດສອບຄືນ ແລະ ການສະຫຼຸບງົບປະມານຂາດຕົວ ປະຈຳປີ 2024 ຂອງແຂວງຫຼວງພະບາງ, ກອງປະຊຸມຂໍສະແດງຄວາມຊົມເຊີຍຕໍ່ອົງການກວດສອບປະຈຳພາກເໜືອ 1 ທີ່ໄດ້ເອົາໃຈໃສ່ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃນການກວດສອບຄືນຕາມມະຕິກອງປະຊຸມສະພາ ແລະ ການກວດສອບບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານ ປະຈຳປີ 2024 ໄດ້ຢ່າງລະອຽດແລະຊັດເຈນ, ເຊິ່ງເຫັນໄດ້ວ່າ ມີການກວດພົບການໃຊ້ຈ່າຍງົບປະມານຂອງລັດ ບໍ່ຖືກຕ້ອງຂອງອົງການລັດຈຳນວນໜຶ່ງ. ກອງປະຊຸມສະເໜີໃຫ້ອົງການກວດສອບປະຈຳພາກເໜືອ1ປະສານສົມທົບ ກັບ ພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ຄະນະກຳມະການປົກຄອງແຂວງ ໃນການຕິດຕາມກວດກາ,ການນຳພາ-ຊີ້ນຳ ພ້ອມທັງຊຸກຍູ້ພາກສ່ວນທີ່ກ່ຽວຂ້ອງ ຮີບຮ້ອນແກ້ໄຂ ຕາມຜົນຂອງການກວດສອບຢ່າງເດັດຂາດ-ເຂັ້ມງວດ ແລະ ໃຫ້ປະກົດຜົນເປັນຈິງ, ເພື່ອຮັບປະກັນ ບໍ່ໃຫ້ຊັບສິນບັດ ແລະ ງົບປະມານຂອງລັດ ຕົກເຮ່ຍເສຍຫາຍ;ເປັນການຮັບປະກັນ ການດຳເນີນຄະດີ ຕໍ່ຜູ້ທີ່ລະເມີດກົດໝາຍ; ກອງປະຊຸມໄດ້ຮັບຮອງ ບົດລາຍງານ ການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2025 ແລະ ທິດທາງແຜນການປະຈຳປີ 2026 ຂອງອົງການກວດກາລັດແຂວງ ກອງປະຊຸມໄດ້ຕີລາຄາສູງ ຕໍ່ອົງການກວດກາລັດແຂວງ ທີ່ໄດ້ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຕາມກົດໝາຍກຳນົດໄວ້ ໄດ້ເປັນຢ່າງດີ, ເຊິ່ງສາມາດກວດເຫັນການນຳໃຊ້ງົບປະມານຂອງລັດທີ່ເຫັນວ່າຍັງບໍ່ທັນຖືກຕ້ອງຕາມກົດໝາຍ, ລວມທັງການປະຕິບັດມາດຕະການ ຕ້ານ ແລະ ສະກັດກັ້ນ ການສໍ້ລາດບັງຫຼວງ ເຫັນໄດ້ວ່າ ຜ່ານມາ ມີຈຳນວນໜຶ່ງແມ່ນລະເມີດກົດໝາຍ ແຕ່ການແກ້ໄຂ, ເກັບກູ້ຊັບສິນຂອງລັດ ແລະ ການດຳເນີນຄະດີ ຕໍ່ຜູ້ລະເມີດ ແມ່ນຍັງບໍ່ທັນເຂັ້ມງວດ. ສະນັ້ນ, ກອງປະຊຸມຈຶ່ງໄດ້ສະເໜີ ໃຫ້ອົງການກວດກາລັດແຂວງ ເອົາໃຈໃສ່ແກ້ໄຂຜົນຂອງການກວດສອບ ແລະ ຜົນຂອງການກວດກາໃຫ້ເຂັ້ມງວດ ແລະ ເດັດຂາດ ທັງຮັບປະກັນການຍົກສູງຄຸນນະພາບ ຂອງວຽກງານກວດກາ ໃຫ້ສູງຂຶ້ນ;

ພ້ອມນັ້ນ,ກອງປະຊຸມໄດ້ຮັບຮອງ ບົດລາຍງານ ການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2025 ແລະ ທິດທາງແຜນການ ປະຈຳປີ 2026 ຂອງອົງການໄອຍະການປະຊາຊົນພາກເໜືອ ແລະ ອົງການໄອຍະການປະຊາຊົນແຂວງ ກອງປະຊຸມໄດ້ເຫັນດີເປັນເອກະພາບ ຮັບຮອງເອົາເນື້ອໃນຂອງບົດລາຍງານ ທີ່ໄດ້ຍົກໃຫ້ເຫັນຜົນສຳເລັດ ຂອງການຈັດຕັ້ງປະຕິບັດວຽກງານ ໃນໄລຍະຜ່ານມາ; ກອງປະຊຸມສະເໜີໃຫ້ ອົງການໄອຍະການປະຊາຊົນພາກເໜືອ ແລະ ອົງການໄອຍະການປະຊາຊົນແຂວງ ສືບຕໍ່ເພີ່ມທະວີການຕິດຕາມກວດກາແລະການຈັດຕັ້ງປະຕິບັດກົດໝາຍ ໃຫ້ຖືກຕ້ອງ ແລະ ເຂັ້ມງວດ; ກອງປະຊຸມໄດ້ຮັບຮອງ ບົດລາຍງານການຈັດຕັ້ງປະຕິບັດວຽກງານປະຈຳປີ 2025 ແລະ ທິດທາງແຜນການ ປະຈຳປີ 2026 ຂອງສານປະຊາຊົນພາກເໜືອ ແລະ ສານປະຊາຊົນແຂວງ ກອງປະຊຸມ ຂໍສະແດງຄວາມຊົມເຊີຍຕໍ່ຜົນສຳເລັດໃນການຈັດຕັ້ງປະຕິບັດວຽກງານ ໃນໄລຍະ 01 ປີຜ່ານມາ, ເຊິ່ງສາມາດເຮັດໃຫ້ການຕັດສິນ, ການພິພາກສາຄະດີ ມີປະສິດທິພາບສູງຂຶ້ນ ແລະ ວ່ອງໄວກວ່າເກົ່າ. ກອງປະຊຸມສະເໜີໃຫ້ສືບຕໍ່ຮັກສາມູນເຊື້ອຄວາມເປັນເອກະພາບພາຍໃນ, ປະສານສົມທົບກັນ ເພື່ອຮັບປະກັນ ໃຫ້ການຈັດຕັ້ງປະຕິບັດວຽກງານ ມີຄວາມວ່ອງໄວ, ຮັບປະກັນຄວາມຍຸຕິທຳ ເພື່ອໃຫ້ສັງຄົມມີຄວາມເຊື່ອໝັ້ນຕໍ່ການນຳພາ-ຊີ້ນຳ ຂອງພັກ ແລະ ລັດ, ເອົາໃຈໃສ່ຍົກສູງຄວາມຮູ້ຄວາມສາມາດ, ສ້າງ ແລະ ສຶກສາອົບຮົມໃຫ້ຜູ້ພິພາກສາມີຈັນຍາບັນ ແລະ ຈັນຍາທຳ, ໃຫ້ເອົາໃຈໃສ່ຄົ້ນຄວ້າຄະດີໃຫ້ຄົບຖ້ວນ, ຢ່າງຮອບດ້ານ ແລະ ພາວະວິໄສ ເພື່ອເຮັດໃຫ້ການຕັດສິນ ແລະ ພິພາກສາຄະດີ ຖືກຕ້ອງຕາມກົດໝາຍ, ສອດຄ່ອງກັບສະພາບຄວາມເປັນຈິງແລະສາມາດຈັດຕັ້ງປະຕິບັດໄດ້; ຮັບຮອງບົດລາຍງານ ການຈັດຕັ້ງປະຕິບັດວຽກງານ05ປີ, ການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2025 ແລະ ທິດທາງແຜນການ ປະຈຳປີ 2026 ຂອງສະພາປະຊາຊົນແຂວງ,ເຫັນໄດ້ວ່າ ຜ່ານການຈັດຕັ້ງປະຕິບັດວຽກງານໃນໄລຍະ 05 ປີຜ່ານມາ ແມ່ນສາມາດປະຕິບັດໜ້າທີ່ໄດ້ເປັນຢ່າງດີ ໃນການຈັດຕັ້ງປະຕິບັດພາລະບົດບາດ ໃນການພິຈາລະນາ ແລະ ຮັບຮອງເອົາການສ້າງຂໍ້ຕົກລົງຂອງແຂວງ, ການຮັບຮອງບັນຫາສຳຄັນພື້ນຖານຂອງແຂວງ ແລະ ການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ,ກົດໝາຍ ແລະນິຕິກຳໃຕ້ກົດໝາຍ. ນອກຈາກນັ້ນ ການລົງພົບປະຜູ້ມີສິດເລືອກຕັ້ງ ກໍສາມາດເຮັດສຳເລັດຕາມແຜນການທີ່ວາງໄວ້, ໄປຄຽງຄູ່ກັບ ການປຸກລະດົມການຊ່ວຍເຫຼືອດ້ານຕ່າງໆ ຈາກສັງຄົມ ເພື່ອນຳໄປຊ່ວຍເຫຼືອປະຊາຊົນ ກໍສາມາດເຮັດໄດ້ຢ່າງເປັນປົກກະຕິ ເຊິ່ງໄດ້ເຮັດໃຫ້ບົດບາດຂອງສະພາປະຊາຊົນແຂວງ ໄດ້ຮັບການເຊີດຊູ ນັບມື້ນັບກວ້າງຂວາງ ແລະ ສູງຂຶ້ນ, ທັງໄດ້ຮັບການໄວ້ເນື້ອເຊື່ອໃຈຈາກ ສັງຄົມ ແລະ ປະຊາຊົນບັນດາເຜົ່ານັບມື້ນັບຫຼາຍຂຶ້ນ, ກອງປະຊຸມ ສະເໜີໃຫ້ບັນດາທ່ານ ສະມາຊິກສະພາປະຊາຊົນແຂວງ ເອົາໃຈໃສ່ ແລະ ຍົກສູງບົດບາດການນຳພາ-ຊີ້ນຳ ຂອງພັກ, ການຈັດຕັ້ງປະຕິບັດກົດໝາຍຂອງລັດ ແລະ ຄວາມເປັນແບບຢ່າງ ໃນດ້ານຕ່າງໆ ໃຫ້ສົມກັບພາລະບົດບາດ ໃນການເປັນຕົວແທນແຫ່ງສິດຜົນປະໂຫຍດຂອງປະຊາຊົນ, ພ້ອມທັງໃຫ້ຍົກສູງຄູນນະພາບ ຂອງການເປັນສະມາຊິກສະພາປະຊາຊົນແຂວງ ແລະ ໄດ້ຮັບຟັງບົດປະກອບຄຳເຫັນຂອງແນວລາວສ້າງຊາດແຂວງ ກ່ຽວກັບ ການຕິດຕາມກວດກາການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາປະຊາຊົນແຂວງ ໃນໄລຍະ 05 ປີ ແລະ ການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2025 ແລະ ທິດທາງແຜນການ ປະຈຳປີ 2026. ຂໍສະແດງຄວາມຊົມເຊີຍ ຕໍ່ອົງການແນວລາວສ້າງຊາດແຂວງ ທີ່ໄດ້ເອົາໃຈໃສ່ໃນການຕິດຕາມກວດກາການຈັດຕັ້ງປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາປະຊາຊົນແຂວງ. ໃນນັ້ນ, ໄດ້ສະເໜີໃຫ້ສະພາປະຊາຊົນແຂວງ ເອົາໃຈໃສ່ໃນການລົງໂຄສະນາ,ເຜີຍແຜ່ຜົນສຳເລັດ ແລະ ເອກະສານຕ່າງໆ ຂອງພັກ-ລັດ, ມະຕິຂອງສະພາແຫ່ງຊາດ ແລະ ມະຕິຂອງສະພາປະຊາຊົນແຂວງຢ່າງເປັນປົກກະຕິ ແລະ ໃຫ້ເຂົ້າເຖິງທຸກທ້ອງຖິ່ນຮາກຖານ ເພື່ອເຮັດໃຫ້ປະຊາຊົນບັນດາເຜົ່າ ມີຄວາມຮັບຮູ້, ເຂົ້າໃຈ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ.

ໃນຊ່ວງກອງປະຊຸມ, ຄະນະຮັບຜິດຊອບ ຍັງໄດ້ຮັບໂທລະສັບສາຍດ່ວນ ຈຳນວນ 4 ສາຍ, 6 ຄຳສະເໜີ. ໃນນັ້ນ, ບັນຫາສ່ວນໃຫຍ່ແມ່ນການສະເໜີກ່ຽວກັບ ວຽກງານຂົງເຂດໂຍທາທິການ ແລະ ຂົ່ນສົ່ງ, ວຽກງານອຸດສາຫະກຳ ແລະ ການຄ້າ, ວຽກງານ ວັດທະນະທຳ ແລະ ການທ່ອງທ່ຽວ ເປັນຕົ້ນແມ່ນ: ສະເໜີໃຫ້ກວດກາຄືນກ່ຽວກັບຄວາມເອກະພາບໃນການອອກຊື່ບໍລິສັດເພື່ອໃຫ້ບໍລິຫານລົດຕູ້ນຳທ່ຽວພາຍໃນແຂວງ, ສະເໜີໃຫ້ກວດກາຄືນກ່ຽວກັບການກຳນົດລາຄາຄ່າບໍລິການນ້ຳດື່ມພາຍໃນ ນະຄອນ-ຫຼວງພະບາງບາງບໍລິສັດຍັງບໍ່ປະຕິບັດຕາມແຈ້ງການສະບັບເລກທີ1467/

ອ່ານຕໍ່ໜ້າ 7

# ກອງປະຊຸມຄົບຄະນະ 3 ຄະນະກຳມະການ ແລະ ຄະນະເລຂາທິການສະພາປະຊາຊົນ ປະຈຳປີ 2025




(ສພຂ) - ວັນທີ 15 ທັນວາຜ່ານມາ, ສະພາປະຊາຊົນແຂວງ (ສພຂ) ວຽງຈັນ ໄດ້ຈັດກອງປະຊຸມຄົບຄະນະ ຂອງ 3 ຄະນະກຳມະການ ແລະ ຄະນະເລຂາທິການສະພາປະຊາຊົນແຂວງວຽງຈັນ ປະຈຳປີ 2025 ທີ່ຫ້ອງປະຊຸມ ສພຂ ໂດຍການເປັນປະທານຂອງທ່ານບຸນສອນ ເຜີດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ; ເຂົ້າຮ່ວມມີບັນດາປະທານ-ຮອງປະທານຄະນະກຳມະການ ແລະ ເລຂາ-ຮອງເລຂາທິການສະພາປະຊາຊົນ; ຄະນະປະຈຳພັກແຂວງ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ ແລະ ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງແລະພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງບົດສະຫຼຸບການເຄື່ອນໄຫວວຽກງານ 5 ປີ (ປີ 2021-2025) ແລະ ທິດທາງແຜນການ 5 ປີ (ປີ 2026-2030), ບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2025 ແລະ ທິດທາງ ແຜນການປະຈຳປີ 2026 ຂອງຄະນະກຳມະການ ເສດຖະກິດ, ແຜນການແລະການເງິນ; ບົດສະຫຼຸບການເຄື່ອນໄຫວວຽກງານ 5 ປີ (ປີ 2021-2025) ແລະ ທິດທາງແຜນການ 5 ປີ (ປີ 2026-2030), ບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2025 ແລະ ທິດທາງ ແຜນການປະຈຳປີ2026ຂອງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ; 3. ບົດສະຫຼຸບການເຄື່ອນໄຫວວຽກງານ 5 ປີ (ປີ 2021-2025)ແລະທິດທາງແຜນການ 5 ປີ (ປີ 2026-2030), ບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2025 ແລະ ທິດທາງ ແຜນການປະຈຳປີ 2026 ຂອງຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ. 4. ບົດສະຫຼຸບການເຄື່ອນໄຫວວຽກງານ 5 ປີ (ປີ 2021-2025) ແລະ ທິດທາງແຜນການ 5 ປີ (ປີ 2026-2030), ບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2025 ແລະ ທິດທາງ ແຜນການປະຈຳປີ 2026 ຂອງຄະນະເລຂາທິການສະພາປະຊາຊົນແຂວງວຽງຈັນ; ຈາກນັ້ນ, ບັນດາຜູ້ແທນໄດ້ພ້ອມກັນສຸມສະຕິປັນຍາ ແລະ ທະວີຄວາມຮັບຜິດຊອບປະກອບຄຳຄິດ-ຄຳເຫັນຢ່າງພາວະວິໄສກົງໄປ-ກົງມາ ແລະ ມີລັກສະນະສ້າງສັນ ສາມາດຊອກໃຫ້ເຫັນດ້ານດີ, ດ້ານອ່ອນຄົງຄ້າງ, ສາເຫດ ແລະ ວິທີແກ້ໄຂໃນຕໍ່ໜ້າ.

ທ່ານ ບຸນສອນ ເຜີດລາວັນ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນງານທີ່ສາມາດຍາດມາໄດ້ ທັງເນັ້ນໜັກໃຫ້ສຸມໃສ່ຈັດຕັ້ງປະຕິບັດຕາມແຜນການ ທີ່ກຳນົດໄວ້ໃນພາກທິດທາງແຜນການຂອງບົດສະຫຼຸບ ໃຫ້ເປັນແຜນເຄື່ອນໄຫວອັນລະອຽດ ເພື່ອພ້ອມກັນຈັດຕັ້ງປະຕິບັດໃຫ້ເກີດດອກອອກຜົນ ແລະ ຍາດໄດ້ຜົນງານຫຼາຍກວ່າເກົ່າ; ທັງຮຽກຮ້ອງໃຫ້ 3 ຄະນະກຳມະການ, ຄະນະເລຂາທິການ ແລະ ພະນັກງານ-ລັດຖະກອນ ຈົ່ງສຸມທຸກຄວາມຮູ້ຄວາມສາມາດກຳລັງວັງຊາປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນການດັ່ງກ່າວ ໃຫ້ບັນລຸຕາມຈຸດປະສົງ ລະດັບຄາດໝາຍທີ່ວາງໄວ້.



# ກອງປະຊຸມຮ່ວມ ຄະນະປະສານງານ ສພຂ ກັບ ຫ້ອງວ່າການແຂວງ



(ສພຂ) - ເພື່ອເຮັດໃຫ້ການກະກຽມວຽກງານຮອບດ້ານໃນການດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ຊຸດທີ IV ໃຫ້ໄດ້ຮັບຜົນດີ ແລະ ມີຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້; ວັນທີ 8 ທັນວາຜ່ານມາ ຄະນະປະສານງານຄະນະເລຂາທິການສະພາປະຊາຊົນແຂວງ ແລະ ຄະນະປະສານງານຫ້ອງວ່າການແຂວງ ໄດ້ດຳເນີນກອງປະຊຸມຄົ້ນຄວ້າປຶກສາຫາລື ແລະ ແບ່ງຄວາມຮັບຜິດຊອບ ໃນການກະກຽມຄວາມພ້ອມຮອບດ້ານ ໃຫ້ແກ່ການດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງ ສພຂ ບໍລິຄຳໄຊ ຊຸດທີ IV ໂດຍການເປັນປະທານຮ່ວມຂອງທ່ານ ທິລະພົງ ຈັນຕາ ຮອງເລຂາທິການສະພາປະຊາຊົນແຂວງ, ຫົວໜ້າຄະນະປະສານງານຄະນະເລຂາທິການ ແລະ ທ່ານ ນາງ ສົມສະໜຸກ ໄຊມູນຄຳ ຮອງຫົວໜ້າຫ້ອງວ່າການແຂວງ; ມີບັນດາທ່ານຮອງປະທານຄະນະກຳມະການ, ຫົວໜ້າພະແນກການທີ່ກ່ຽວຂ້ອງ, ຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງແລະວິຊາການທີ່ກ່ຽວຂ້ອງ ທັງສອງພາກສ່ວນເຂົ້າຮ່ວມ.

ກອງປະຊຸມໄດ້ຕີລາຄາຄືນດ້ານດີ, ດ້ານອ່ອນ ແລະ ຂໍ້ຄົງຄ້າງ ໃນການພົວພັນປະສານງານລະຫວ່າງຄະນະເລຂາທິການສະພາປະຊາຊົນແຂວງກັບຫ້ອງວ່າການແຂວງ ໃນໄລຍະຜ່ານມາ ກໍຄືການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ9ຂອງສພຂ; ພ້ອມນັ້ນ, ຍັງໄດ້ປຶກສາຫາລື ແບ່ງຄວາມຮັບຜິດຊອບໃນການກະກຽມຄວາມພ້ອມ ໃຫ້ແກ່ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຂ.

**(ໂສລະຢ້ຳ)**



# ເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ການເລືອກຕັ້ງ ສສຊ -ສສຂ ຢູ່ເມືອງດາກຈຶງ




(ສພຂ) - ວັນທີ 20 ພະຈິກຜ່ານມາ, ທ່ານປອ. ຕຸລາວັນ ວົງໄຊ ຄະນະປະຈຳພັກແຂວງ ແລະ ທ່ານ ໃຈເພັດ ພັນທະວົງ ກຳມະການພັກແຂວງ ປະທານກຳມະການຍຸຕິທຳ ແລະ ປກຊ-ປກສ ສະພາປະຊາຊົນແຂວງ (ສພຂ) ເຊກອງ ພ້ອມດ້ວຍຄະນະສະມາຊິກສະພາປະຊາຊົນແຂວງ(ສສຂ)ປະຈຳເຂດເລືອກຕັ້ງເມືອງດາກຈຶງ ໄດ້ເຜີຍແຜ່ກົດໝາຍແລະບັນດານິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານເລືອກຕັ້ງ ສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສສຂ ຊຸດທີ V ທີ່ສະໂມສອນເມືອງດາກຈຶງ; ເຂົ້າຮ່ວມມີທ່ານ ເພັງນາ ຈັນທະພອນ ກຳມະການພັກແຂວງ, ເລຂາພັກເມືອງ; ມີຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ຫົວໜ້າ-ຮອງຫ້ອງການພ້ອມດ້ວຍພະນັກງານຫຼັກແຫຼ່ງ ຂອງເມືອງເຂົ້າຮ່ວມ.

ທ່ານ ປອ. ຕຸລາວັນ ວົງໄຊ ໄດ້ເຜີຍແຜ່ມະຕິສະບັບເລກທີ 26/ກມສພ, ລົງວັນທີ 12 ກັນຍາ 2025 ກ່ຽວກັບການເພີ່ມທະວີການນຳພາ-ຊີ້ນຳຂອງອົງຄະນະພັກທຸກຂັ້ນ ຕໍ່ກັບການເລືອກຕັ້ງ ສສຊ ຊຸດທີ X ແລະ ສພຂ ຊຸດທີ V ເຊິ່ງຍົກໃຫ້ເຫັນບັນດາເນື້ອໃນທີ່ສຳຄັນ ແລະ ຄວາມຈຳເປັນໃນການເພີ່ມທະວີການນຳພາ-ຊີ້ນຳຂອງອົງຄະນະພັກທຸກຂັ້ນ, ຈຸດປະສົງ, ລະດັບຄາດໝາຍ, ວຽກງານຈຸດສຸມ ແລະ ວິທີການຈັດຕັ້ງປະຕິບັດ; ພ້ອມນັ້ນ, ທ່ານຍັງໄດ້ເນັ້ນໃຫ້ຖືເອົາການເລືອກຕັ້ງສະມາຊິກສະພາແຕ່ລະຂັ້ນເປັນໜ້າທີ່ການເມືອງ, ເປັນພັນທະ ແລະ ຄວາມຮັບຜິດຊອບໂດຍກົງ ຂອງທຸກອົງການ ແລະ ພະນັກງານ-ລັດຖະກອນທຸກຄົນ; ເສີມຂະຫຍາຍສິດເປັນເຈົ້າ ທາງດ້ານການເມືອງຂອງປະຊາຊົນລາວບັນດາເຜົ່າເຂົ້າໃນການເລືອກຕັ້ງຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງຕົນ, ຮັບປະກັນໃຫ້ການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V ບັນລຸຜົນສຳເລັດຕາມທີ່ລະດັບຄາດໝາຍ ຄື: ນຳພາຜູ້ມີສິດເລືອກຕັ້ງ ໄປປ່ອນບັດເລືອກຕັ້ງ ໃຫ້ຄົບຖ້ວນ, ນຳພາຜູ້ມີສິດເລືອກຕັ້ງ ໃຊ້ຄູຫາໃນການປ່ອນບັດເລືອກຕັ້ງ ຖືກຕ້ອງຕາມລະບຽບການເລືອກຕັ້ງ, ນຳພາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ມີຄວາມສະຫງົບ ແລະ ມີຄວາມປອດໄພ ແລະ ນຳພາວຽກງານປ່ອນບັດເລືອກຕັ້ງ ໃຫ້ຮັບປະກັນຄວາມໂປ່ງໃສ ແລະ ສຳເລັດທັນຕາມກຳນົດເວລາ.

ນອກນີ້, ຍັງໄດ້ເຊື່ອມຊຶມກ່ຽວກັບບັນດາເນື້ອໃນກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບປັບປຸງ ປີ 2024; ກົດໝາຍວ່າດ້ວຍ ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ສະບັບປັບປຸງ ປີ 2024; ແຈ້ງການສະບັບເລກທີ 362/ຄລສ, ລົງວັນທີ 13 ຕຸລາ 2025 ກ່ຽວກັບວຽກງານກະກຽມເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ V ແລະ ສົນທະນາແລກປ່ຽນກ່ຽວກັບບັນດາເນື້ອໃນທີ່ຍັງບໍ່ເຂົ້າໃຈເລິກເຊິ່ງ ເພື່ອພ້ອມກັນຄົ້ນຄວ້ານຳໄປຈັດຕັ້ງປະຕິບັດໃຫ້ເໝາະສົມ.

**(ສຸກກະສັນ)**



## ສຳເລັດ...

(ຕໍ່ຈາກໜ້າ 1)

(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ ຊຸດທີ IV ໄດ້ດຳເນີນໃນວັນທີ29-30ທັນວານີ້ ໂດຍການເປັນປະທານຂອງທ່ານ ເພັງ ນິລັນ ຄຳພັນເພັງ ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີທ່ານ ພທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 7; ທ່ານ ປອ. ລີເບີ ລີບົວປາວ ກຳມະການສູນກາງພັກ, ຄະນະປະຈຳສະພາແຫ່ງຊາດ, ສສຊປະຈຳເຂດເລືອກຕັ້ງທີ 7; ທ່ານ ດວງຕາ ໄຊວຸດ ປະທານຄະນະກຳມະການປົກຄອງແຂວງໄຊຍະບູລີ; ທ່ານ ພົງສະຫວັນ ສິດທະວົງ ອະດີດກຳມະການສູນກາງພັກ, ອະດີດເຈົ້າແຂວງໄຊຍະບູລີ;ບັນດາຄະນະປະຈຳພັກແຂວງ, ສສຊ ປະຈຳເຂດເລືອກຕັ້ງທີ 7, ຄະນະປະຈຳສະພາປະຊາຊົນແຂວງ, ກຳມະການພັກແຂວງ, ອະດີດການນຳຂອງແຂວງ, ອະດີດ ສສຊ ປະຈຳເຂດເລືອກຕັ້ງທີ 7, ສະມາຊິກສະພາປະຊາຊົນແຂວງ, ພະນັກງານປະຕິວັດອາວຸໂສ-ບຳນານ, ຕາງໜ້າອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ນາຍບ້ານເທດສະບານ, ນັກທຸລະກິດ ແລະ ຜູ້ປະກອບການ.

ກອງປະຊຸມໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງ ຄື: ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ຄັ້ງທີ VII (2021 -2025), ປະຈຳປີ 2025; ແຜນງົບປະມານແຫ່ງລັດຂອງແຂວງ 5 ປີ (2021-2025),ປະຈຳປີ2025 ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງປະຈຳປີ 2026, ແຜນງົບປະມານແຫ່ງລັດຂອງແຂວງປະຈຳປີ2026; ບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ໃນໄລຍະ 5 ປີ (2021-2025) ແລະ ທິດທາງແຜນການໃນຕໍ່ໜ້າ; ບົດລາຍງານຂອງອົງການກວດສອບປະຈຳພາກເໜືອ 1 ກ່ຽວກັບການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານ 5 ປີ (2021-2025),ປະຈຳປີ2025, ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງປະຈຳປີ2024; ບົດລາຍງານຂອງອົງການກວດກາລັດແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ5ປີ(2021-2025), ປະຈຳປີ 2025, ບົດລາຍງານຜົນການກວດກາຕາມຜົນການກວດສອບ ປີ 2024; ບົດລາຍງານຂອງສານປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ 2025 ແລະ ແຜນການເຄື່ອນໄຫວວຽກງານປະຈຳປີ 2026; ບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ 2025 ແລະ ແຜນການເຄື່ອນໄຫວວຽກງານປະຈຳປີ 2026; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ5ປີ(2021-2025), ປະຈຳປີ 2025 ຂອງສະພາປະຊາຊົນແຂວງ ຊຸດທີ IV ແລະ ວຽກງານຈຸດສຸມຮອດກອງປະຊຸມຄັ້ງປະຖົມມະລຶກຂອງສພຂ ຊຸດທີ V.

ພ້ອມນັ້ນ,ຍັງໄດ້ຮັບຟັງການປະກອບຄຳເຫັນຈາກຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 7, ຕາງໜ້າແນວລາວສ້າງຊາດແຂວງ, ຄະນະປະຈຳສະພາປະຊາຊົນແຂວງ ຕໍ່ບັນດາບົດລາຍງານທີ່ອົງການປົກຄອງແຂວງ ກໍຄື ພະແນກການ, ກົມກອງ ທີ່ໄດ້ນຳມາຜ່ານກອງປະຊຸມ ດ້ວຍຄວາມຮັບຜິດຊອບສູງແລະ ໃຫ້ການຕີລາຄາຢ່າງພາວະວິໄສ,ກົງໄປກົງມາ ຕໍ່ບັນຫາສຳຄັນທີ່ສັງຄົມສົນໃຈແລະ ໄດ້ຕີລາຄາຢ່າງພາວະວິໄສ, ຖືກຕ້ອງ, ສອດຄ່ອງກັບສະພາບຄວາມຈິງ; ນອກນີ້, ຍັງໄດ້ຈັດຕັ້ງພິທີມອບຫຼຽນກາທີລະນຶກ 50 ປີ ສະພາແຫ່ງຊາດ ໃຫ້ແກ່ການນຳ, ອະດີດການນຳຂອງສະພາແລະອົງການປົກຄອງແຂວງອີກດ້ວຍ.

**(ນາງ ອາລິນ ສຸພົມມະປະດິດ)**







## ບຸນກິນຈຽງ...

(ຕໍ່ຈາກໜ້າ 1)

ມອນໄຊ ລາວມົວຊື່ງ ກຳມະການສຳຮອງສູນກາງພັກ, ຮອງປະທານສູນກາງແນວລາວສ້າງຊາດ (ສນຊ), ທ່ານ ສົມປະສົງ ສຸວົງຄຳຈັນ ຮອງປະທານຄະນະກຳມະການປົກຄອງແຂວງວຽງຈັນ, ບັນດາການນຳຂັ້ນແຂວງ-ເມືອງ, ເຈົ້າກົກ-ເຈົ້າເຫຼົ່າ, ຫົວໜ້າຊົ່ງຊາວ ແລະ ປະຊາຊົນບັນດາເຜົ່າ 11 ບ້ານພາຍໃນເມືອງເຂົ້າຮ່ວມຢ່າງຫຼວງຫຼາຍ.

ໃນພິທີ, ທ່ານ ຈັນເພັງ ຊື່ງ ກຳມະການແນວລາວສ້າງຊາດແຂວງວຽງຈັນ ໄດ້ລາຍງານກ່ຽວກັບຄວາມເປັນມາຂອງບຸນກິນຈຽງ (ນໍເປເຈົ່າ) ຊົນເຜົ່າມົ້ງ ໂດຍປະຕິບັດຕາມຮີດຄອງປະເພນີຂອງຊົນເຜົ່າມົ້ງເຊິ່ງໄດ້ຈັດຂຶ້ນທຸກໆປີ ທີ່ໄດ້ສືບທອດກັນມາແຕ່ດົນນານແລ້ວ, ເປັນການສົ່ງທ້າຍປີເກົ່າ ແລະ ຕ້ອນຮັບປີໃໝ່, ຕີລາຄາຜົນສຳເລັດແຫ່ງການເກັບກູ້ຜົນຜະລິດພືນລະປູກ; ຊົນເຜົ່າມົ້ງ ມີວັດທະນະທຳ-ຮີດຄອງປະເພນີອັນດີງາມທີ່ເປັນເອກະລັກຂອງເຜົ່າ, ມີມູນເຊື້ອຕໍ່ສູ້ພິລະອາດຫານບໍ່ຍອມຈຳນົນ, ມີຄວາມອົດທົນ, ກ້າຫານ, ດຸໝັ່ນ. ບຸນດັ່ງກ່າວ ແມ່ນກົງກັບເດືອນ 12 ສາກົນ ແລະ ກົງກັບແຮມ 15 ຄ່ຳຂອງເດືອນຈຽງເດືອນລາວ ແລະ ຈັດຂຶ້ນພາຍຫຼັງເກັບກູ້ຜົນຜະລິດກະສິກຳສຳເລັດ; ກ່ອນຈະເຖິງບຸນນໍເປເຈົ່າຂອງປະຊາຊົນເຜົ່າມົ້ງ ໄດ້ມີການຫ້າງຫາກະກຽມສິ່ງທີ່ຈຳເປັນເປັນຕົ້ນ ເຕົ້າໂຮມເຄື່ອງມືອອກແຮງງານທຸກຊະນິດ, ກະກຽມສະບຽງອາຫານການກິນປະເພດຕ່າງໆ ແລະ ເຄື່ອງໃຊ້ພາຍໃນຄອບຄົວເຊັ່ນ: ເຂົ້າ, ເຂົ້າປະປາ, ຜັກ, ຟືນ, ນ້ຳ, ເຄື່ອງນຸ່ງ ແລະ ອື່ນໆ ໃຫ້ພຽງພໍພາຍໃນກຳນົດ 3 ວັນ; ໃນເວລາເຮັດບຸນ ຕ້ອງໄດ້ຄະລຳ 3 ວັນ ໂດຍສະເພາະຫ້າມໃຊ້ຈ່າຍເງິນຄຳ, ຫ້າມໄປອອກແຮງງານ, ໄປຊອກຫາກິນ, ຫ້າມຫຼິ້ນຜ້າ, ມີດ ທີ່ເປັນປະເພດແຫຼມຄົມ ແລະ ອື່ນໆ; ໃນໂອກາດບຸນປີໃໝ່ດັ່ງກ່າວ ຍັງເປັນເງື່ອນໄຂໃຫ້ແກ່ຊາຍໜຸ່ມ-ຍິງໜຸ່ມ (ບ່າວ-ສາວ) ໄດ້ພົບໜ້າພໍ້ຕາ ແລະ ມີໂອກາດຊອກຫາຄູ່ຄອງເພື່ອສ້າງຄອບຄົວ.

ໂອກາດນີ້, ທ່ານ ມອນໄຊ ລາວມົວຊື່ງ ໄດ້ກ່າວວ່າ: ການສະເຫຼີມສະຫຼອງບຸນປີໃໝ່ຂອງພີ່ນ້ອງຊົນເຜົ່າມົ້ງ ແມ່ນບຸນໜຶ່ງທີ່ມີຄວາມໝາຍສຳຄັນໃນຊີວິດວັດທະນະທຳຮີດຄອງປະເພນີອັນເປັນມູນເຊື້ອທີ່ດີງາມ ໄດ້ໝູນວຽນມາຄົບຮອບອີກວາລະໜຶ່ງ ທັງເປັນການປະກອບສ່ວນໃນການອະນຸລັກ ແລະ ສົ່ງເສີມດ້ານວັດທະນະທຳຮີດຄອງປະເພນີຂອງຊົນເຜົ່າ, ການສະເຫຼີມສະຫຼອງບຸນນໍເປເຈົ່າປີນີ້ ດຳເນີນແບບກະທັດຮັດເບົາບາງ, ຖືເນື້ອໃນຄວາມໝາຍເປັນຈຸດສຸມ ແນໃສ່ປະຕິບັດນະໂຍບາຍການປະຢັດແລະຫຼຸດຜ່ອນການຟຸມເຟືອຍ. ພ້ອມກັນນີ້, ໃນພິທີຍັງໄດ້ມອບໃບຍ້ອງຍໍໃຫ້ຜູ້ອຸປະຖຳງານດັ່ງກ່າວ ພ້ອມທັງຮັບຊົມການສະແດງສິລະປະ-ວັນນະຄະດີແລະຮ່ວມໂຍນໝາກຄອນຕາມປະເພນີອີກດ້ວຍ.

**(ພາບ-ຂ່າວ: ສນຊ)**

## ຜົນສຳເລັດ...

(ຕໍ່ຈາກໜ້າ 5)

ພອຄ.ຫຼບ, ສະເໜີໃຫ້ກວດກາຄືນກ່ຽວກັບ ຄວາມເປັນລະບຽບຮຽບຮ້ອຍຂອງຕະຫຼາດໜອງຊາຍ ແລະ ບັນຫາອື່ນໆ ເຊິ່ງທາງຄະນະຮັບຜິດຊອບ ຈະໄດ້ນຳສິ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງພິຈາລະນາ-ແກ້ໄຂ ຕາມພະລະບົດບາດພາຍຫຼັງສຳເລັດກອງປະຊຸມ ພ້ອມນັ້ນ, ກອງປະຊຸມຍັງໄດ້ຮັບຟັງການຊີ້ແຈງບັນຫາຕ່າງໆ ທີ່ກຳລັງເປັນບັນຫາຢູ່ໃນສັງຄົມ, ກໍຄືບັນຫາທີ່ປະຊາຊົນໃຫ້ຄວາມສົນໃຈ ໂດຍໄດ້ຮັບການຊີ້ແຈງຈາກພະແນກການຕ່າງໆທີ່ກ່ຽວຂ້ອງ ຢ່າງສົມເຫດສົມຜົນ ແລະ ມີຄວາມເປັນເອກະພາບສູງ;

ຜົນສຳເລັດ ຂອງກອງປະຊຸມຄັ້ງນີ້, ສະແດງໃຫ້ເຫັນຜົນງານອັນພົ້ນເດັ່ນທີ່ຄະນະກຳມະການປົກຄອງແຂວງ, ອົງການກວດສອບປະຈຳພາກເໜືອ 1, ອົງການກວດກາລັດ, ອົງການຕຸລາການ ແລະ ສະພາປະຊາຊົນແຂວງສາມາດຍາດມາໄດ້ ພາຍຫຼັງສຳເລັດກອງປະຊຸມໃນຄັ້ງນີ້ ພວກເຮົາໄດ້ຮັບຜູ້ເຖິງຜົນສຳເລັດ ແລະ ບັນດາຂໍ້ຄົງຄ້າງ ທີ່ຕ້ອງໄດ້ເອົາໃຈໃສ່ປັບປຸງແກ້ໄຂເຂົ້າໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານໃຫ້ດີຂຶ້ນເປັນກ້າວໆ, ພ້ອມທັງ ຊຸກຍູ້ ໃຫ້ການຈັດຕັ້ງຜັນຂະຫຍາຍ ຜົນສຳເລັດຂອງກອງປະຊຸມໃຫຍ່ອົງຄະນະພັກແຂວງຫຼວງພະບາງ ຄັ້ງທີIX ດຳເນີນໄປໄດ້ດ້ວຍຜົນສຳເລັດອັນຈົບງາມ ທັງເປັນການປະກອບສ່ວນ ແລະ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ວຽກງານອື່ນໆຂອງແຂວງ ໃນປີ 2026. ກອງປະຊຸມຄັ້ງນີ້ ໄດ້ບັນລຸຜົນສຳເລັດຕາມແຜນການທີ່ວາງໄວ້, ແຕ່ຜົນສຳເລັດທີ່ກ່າວມານັ້ນ ເປັນພຽງຜົນສຳເລັດໃນເບື້ອງຕົ້ນເທົ່ານັ້ນ, ຮຽກຮ້ອງມາຍັງຄະນະກຳມະການປົກຄອງແຂວງ ໃຫ້ເພີ່ມທະວີຄວາມຮັບຜິດຊອບ ໃນການນຳເອົາຜົນສຳເລັດຂອງກອງປະຊຸມຄັ້ງນີ້, ໄປຈັດຕັ້ງປະຕິບັດ ໃຫ້ປະກົດຜົນເປັນຈິງຕາມພາລະບົດບາດ,ສິດ ແລະ ໜ້າທີ່ ເພື່ອນຳເອົາຜົນປະໂຫຍດມາສູ່ປະຊາຊົນ ແລະ ກ້າວໄປສູ່ການສ້າງສາພັດທະນາແຂວງຫຼວງພະບາງ ໃຫ້ນັບມື້ຈະເລີນເຂັ້ມແຂງຂຶ້ນ. ຮຽກຮ້ອງມາຍັງບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6 ແລະ ບັນດາທ່ານສະມາຊິກສະພາປະຊາຊົນແຂວງ ຊຸດທີ IV, ເພີ່ມທະວີຄວາມຮັບຜິດຊອບນຳເອົາມະຕິຂອງກອງປະຊຸມຄັ້ງນີ້ ໄປຈັດຕັ້ງຜັນຂະຫຍາຍ ໃຫ້ທຸກພາກສ່ວນໄດ້ຮັບຮູ້ຢ່າງທົ່ວເຖິງ, ເພື່ອຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ ແລະ ເພື່ອເຮັດໃຫ້ ທຸກຂົງເຂດວຽກງານ ມີການຫັນປ່ຽນຢ່າງຕັ້ງໜ້າ.

**(ວິລັຍະ ວັນນະສີ)**




# ຂອງບໍ່ເປັນຕາຈ້ຳ ຢ່າຊິຈຸ່ມລິງຕັກ ຂອງບໍ່ເປັນຕາກິນຢ່າກິນຊິພອນທ້ອງ

**# ດັ້ນກົບເມກ**

ຄວາມຄົມຄາຍເລິກແລບໃນຄຳຜະຫຍາ ສຸພາສິດບູຮານ ຍາມໃດມັນກໍຮັກສາຄຸນຄ່າພູມປັນຍາໄວ້ສະເໝີ ເຊິ່ງອາໄສພາສາກາວິ-ກາບກອນ, ໂຄງສານບັນທຶກຈົດແຕ້ມ ຜ່ານຕົວອັກສອນ ທີ່ມັນຍັງທ້າທາຍຄວາມຮູ້-ຄວາມສາມາດຂອງລູກຫຼານລາວຜູ້ເກີດໃໝ່ໃຫຍ່ລຸນ; ຖ້າວ່າເຮົາສົນໃຈເບິ່ງເຫັນຄຸນຄ່າພູມປັນຍາ ເຮົາກໍຄິດຢາກສືບທອດຮັກສາ, ແຕ່ຜູ້ເບິ່ງບໍ່ເຫັນຄຸນຄ່າ ກໍຖືເບົາ ເພາະມັນໃຊ້ຈ່າຍແທນຊັບສິນ ຄືຊັບສິນເງິນຄຳ ບໍ່ໄດ້. ດັ່ງນັ້ນ, ມີບາງຄົນໃນສັງຄົມ ຈຶ່ງມຸ່ງຫາເງິນ ໂດຍຄິດວ່າ ຮັກສາພູມປັນຍາເກົ່າໄວ້ມັນຍາກ.

ຄວາມຄົມຄາຍເລິກແລບທີ່ຊີ້ບອກພູມປັນຍາລາວບູຮານນັ້ນ ເຂົາສອນມີທັງສັ້ນ ແລະ ຍາວ ແຕ່ເວົ້າໃຫ້ຄິດ-ສອນ ຈາກບົດຮຽນຕົວຈິງ ເຊັ່ນສຸພາສິດຫົວຂໍ້ເທິງນັ້ນ ທີ່ເຕືອນໄວ້ວ່າ ອາຫານການກິນ ຫຼື ຈະເປັນຂອງຂວັນ, ຂອງຝາກຈາກຕ່າງແດນ ຖ້າວ່າຮັບເອົານຳເຂົາມາແລ້ວ ກໍຈະເປັນໜີ້ບຸນຄຸນ ຫຼື ອາຫານບາງຊະນິດ ກິນໄປແລ້ວຈະສ້າງບັນຫາໃຫ້ສຸຂະພາບຕາມມາພາຍຫຼັງ; ນີ້ຄືປະເດັນທີ່ຕ້ອງໄດ້ຄິດ, ສຸພາສິດຂໍ້ນີ້ ເພິ່ນສອນບໍ່ໃຫ້ເປັນຄົນເຫັນແກ່ໄດ້ແກ່ກິນ ເຖິງແມ່ນວ່າເຂົາໃຫ້ມາລ້າ ແຕ່ກໍອາດແອບແຝງຜົນປະໂຫຍດໃນເວລາຕໍ່ມາ ເຊິ່ງຈະເທົ່າກັບເຮົາຫຼົງຕິດເຫຍື່ອຕິດກັບດັກທີ່ເຂົາວາງໄວ້.

ຄັນວ່າຂົມຄວາມເວົ້າ ທາງໃນຢ່າຟ້າວຈົ່ມຫຼາຍເນີ ລາງເທື່ອຂົມຂີ້ເພ້ຍ ເມືອໜ້າຫາກຊິດີ, ຢ່າຟ້າວຕິຕຽນເວົ້າ ຜັກກະເດົາຂົມຂື່ນ ບາດວ່າແກ້ມລາບກ້ອຍ ຊິຫຼົງຍ້ອງວ່າດີ ແທ້ນາ.

ສຸພາສິດເຕືອນເລື່ອງຄວາມເວົ້າຄວາມຈາການສະແດງອອກເຖິງຄວາມຄິດທີ່ແຕກຕ່າງ ເຮົາກໍຄວນຮັບຟັງເຂົາໄວ້ກ່ອນ, ນຳເອົາໄປຄິດພິຈາລະນາແບບຄົນມີປັນຍາ ແລ້ວຈຶ່ງຈະເຫັນທາງອອກ, ເຮົາຈຶ່ງຈະເຫັນຄຸນຄ່າໃນພູມປັນຍາຂອງຄົນ ເຊິ່ງຖ້າວ່າເວລາຄົນອື່ນເວົ້າຂັດໃຈ-ເວົ້າຂົມຫູແລ້ວຟ້າວຍົກຍ້າຍປ່ຽນເຂົາໜີ ກໍເທົ່າກັບວ່າເຮົາບໍ່ມັກຄົນເກັ່ງບໍ່ມັກຄົນດີ ພຽງແຕ່ເຂົາເວົ້າຄວາມຈິງ, ຄົນອ້ອມຂ້າງເຂົາກໍຈະໝົດສັດທາໃນຫົວໃຈ ເຖິງເຂົາບໍ່ປາກອອກມາ ແຕ່ເຂົາກໍໝົດໃຈແລ້ວ.

ສັງລວມໄດ້ວ່າ: ຄົນເຮົາໃນສັງຄົມ ຕ້ອງໄດ້ເພິ່ງພາອາໄສກັນປຽບດັ່ງບົວກັບນ້ຳ, ນ້ຳກັບປາ, ມີຜົນນາຈຶ່ງມີເຂົ້າ, ບົວອາໄສເພິ່ງນ້ຳ, ປາເພິ່ງວັງຕົມ, ລູກນ້ອງກັບນາຍກໍເພິ່ງກັນໂດຍດ້ານ; ສິ່ງແວດລ້ອມອ້ອມໂຕທີ່ມີປະໂຫຍດ ເຮົາຕ້ອງໃຊ້ສະຕິປັນຍາສັງລວມຕີລາຄາໃຫ້ເຫັນຄຸນຄ່າ, ຈຶ່ງຮັກສາ ແລະ ສົ່ງເສີມປັນຍາ ດີກວ່າຕັດສ້ອຍໃຫ້ມັນກຸດກຸ້ມ. ສະເໜີເປັນຂໍ້ຄິດ!



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ຮອງປະທານ ຄລຊ, ອະນຸກຳມະການຕ່າງໆ ແລະ ກອງເລຂາຊ່ວຍວຽກ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງລາຍງານການສະຫຼຸບຕີລາຄາການເຄື່ອນໄຫວວຽກງານບາດກ້າວທີ 1, 2 ແລະ ແຜນການຈັດຕັ້ງປະຕິບັດວຽກງານບາດກ້າວທີ3ຂອງຄະນະກຳມະການເລືອກຕັ້ງລະດັບຊາດ; ຜົນສຳເລັດການດຳເນີນກອງປະຊຸມເຝິກອົບຮົມໃຫ້ແກ່ພະນັກງານຫຼັກແຫຼ່ງອ້ອມຂ້າງສູນກາງ ແລະ ທ້ອງຖິ່ນເພື່ອຮັບໃຊ້ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V; ແລະ ບັນຫາຂໍທິດຊີ້ນຳຈາກກອງປະຊຸມຈຳນວນໜຶ່ງ; ພ້ອມກັນນັ້ນ, ກໍໄດ້ຮັບຟັງການລາຍງານເພີ່ມຕື່ມຂອງແຕ່ລະອະນຸກຳມະການຂອງ ຄລຊ. ຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຄົ້ນຄວ້າ, ປະກອບຄວາມເຫັນຢ່າງເລິກເຊິ່ງ, ກົງໄປກົງມາ ແລະ ມີຈຸດສຸມ ຕໍ່ແຕ່ລະເນື້ອໃນ ເພື່ອກ້າວໄປສູ່ການຕົກລົງເປັນເອກະພາບ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ ຕາມຈຸດປະສົງ ແລະ ຄາດໝາຍທີ່ວາງໄວ້.

**(ນາງ ກຸກກິກ ບຸດດາໄຊ)**

## ສານອວຍພອນ...

(ຕໍ່ຈາກໜ້າ 1)

ພີ່ນ້ອງຮ່ວມຊາດ ແລະ ເພື່ອນມິດ ທີ່ຮັກແພງ!

ປີ 2025 ທີ່ກຳລັງຜ່ານພົ້ນໄປນີ້ເປັນປີທີ່ມີຄວາມໝາຍສຳຄັນຍິ່ງ ສຳລັບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂອງພວກເຮົາ ທີ່ໄດ້ພ້ອມກັນສະເຫຼີມສະຫຼອງບັນດາເຫດການປະຫວັດສາດຂອງພັກ, ຂອງຊາດເຮົາ ຢ່າງເປັນຂະບວນຟົດຟື້ນ ແລະ ເຕັມໄປດ້ວຍຄວາມພາກພູມໃຈ, ຄວາມເບີກບານມ່ວນຊື່ນ ແລະ ຄວາມເອກອ້າງທະນົງໃຈ.

ພ້ອມກັນນັ້ນ, ປີ2025 ກໍເປັນອີກປີໜຶ່ງ ທີ່ປວງຊົນລາວທັງຊາດ ໄດ້ຮ່ວມແຮງຮ່ວມໃຈກັນ ຜ່ານຜ່າຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍທົດສອບອັນໃຫຍ່ຫຼວງ, ແຕ່ກໍຜ່ານພົ້ນໄປໄດ້ໂດຍດີ ແລະ ຍັງຍາດໄດ້ຜົນສຳເລັດຫຼາຍດ້ານທີ່ເປັນພື້ນຖານເປັນຕົ້ນແມ່ນ: ຮັກສາໄດ້ສະຖຽນລະພາບດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ, ເສດຖະກິດສືບຕໍ່ຟື້ນຕົວ ແລະ ຂະຫຍາຍຕົວດ້ວຍຈັງຫວະທີ່ດີຂຶ້ນ, ບົດບາດຂອງ ສປປລາວ ໃນເວທີພາກພື້ນ ແລະ ສາກົນ ກໍໄດ້ຮັບການເຊີດຊູສູງເດັ່ນຂຶ້ນຕື່ມ.

ຂ້າພະເຈົ້າ ຂໍສະແດງຄວາມຍ້ອງຍໍສັນລະເສີນ ທີ່ປວງຊົນລາວເຮົາ ຮັກສາໄດ້ມູນເຊື້ອແຫ່ງຄວາມເປັນຈິດໜຶ່ງໃຈດຽວ ອັນໄດ້ປະກອບສ່ວນສຳຄັນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ໃນປີທີ່ຜ່ານມາ ແລະ ຂໍສະແດງຄວາມຂອບໃຈຢ່າງຈິງໃຈ ຕໍ່ການຊ່ວຍເຫຼືອສະໜັບສະໜູນຂອງເພື່ອນມິດສາກົນ ເຂົ້າໃນຜົນສຳເລັດດັ່ງກ່າວຂອງ ສປປລາວ ໃນປີຜ່ານມາ.

ພີ່ນ້ອງຮ່ວມຊາດ, ບັນດາເພື່ອນມິດ ທີ່ຮັກແພງທັງຫຼາຍ!

ປີໃໝ່ 2026 ນີ້, ປະເທດຊາດຂອງພວກເຮົາຈະກ້າວເຂົ້າສູ່ບັນດາເຫດການການເມືອງທີ່ສຳຄັນ ທີ່ຈະດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ, ການກະກຽມເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V, ພ້ອມກັນນັ້ນ ກໍເປັນປີເປີດສາກການຜັນຂະຫຍາຍໂຄງການການເມືອງຂອງພັກ ສະບັບທີ III ແລະ ເປັນປີເລີ່ມຕົ້ນຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030).

ຂ້າພະເຈົ້າ ຂໍຖືໂອກາດນີ້ຮຽກຮ້ອງມາຍັງທົ່ວພັກ, ທົ່ວລັດ ແລະ ທົ່ວປວງຊົນລາວທັງຊາດຈົ່ງສືບຕໍ່ເສີມຂະຫຍາຍມູນເຊື້ອຄວາມສາມັກຄີເປັນຈິດໜຶ່ງໃຈດຽວ, ສຸມທຸກກຳລັງແຮງ ແລະ ສະຕິປັນຍາ ເຂົ້າໃນການສ້າງການຫັນປ່ຽນໃໝ່ຢ່າງແທ້ຈິງ ບົນຈິດໃຈບຸກບືນສູ້ຊົນ, ຍົກສູງສະຕິຊາດ, ເອກະລາດ, ເປັນເຈົ້າຕົນເອງຢ່າງແຂງແຮງ, ພ້ອມກັນພັດທະນາປະເທດຊາດອັນແສນຮັກ ແລະ ຫວງແຫນຂອງພວກເຮົາ ໃຫ້ມີຄວາມເຂັ້ມແຂງ ແລະ ຈະເລີນຮຸ່ງເຮືອງຍິ່ງໆຂຶ້ນ.

ໃນໂອກາດປີໃໝ່ອັນເປັນສິລິມຸງຄຸນນີ້, ຂໍອວຍພອນໃຫ້ພໍ່ແມ່ພີ່ນ້ອງທຸກທົ່ວໜ້າ ແລະ ຂໍສົ່ງຄຳອວຍພອນອັນປະເສີດໄປຍັງເພື່ອນມິດທັງຫຼາຍໃນທົ່ວໂລກ ຈົ່ງມີສຸຂະພາບເຂັ້ມແຂງ ແລະ ມີຄວາມສຸກສັນຕິ.

ຂໍໃຫ້ປີ 2026 ເປັນປີແຫ່ງຄວາມຫວັງໃໝ່ ທີ່ຈະເຫັນປະຊາຊົນໃນທົ່ວໂລກຂອງພວກເຮົາ ໄດ້ດຳລົງຊີວິດຢູ່ຮ່ວມກັນພາຍໃຕ້ທ້ອງຟ້າສີຄາມແຫ່ງສັນຕິພາບ ຕະຫຼອດປີໃໝ່ ແລະ ຕະຫຼອດໄປເທີ້ນ.

ໂຊກດີປີໃໝ່!

ຂໍຂອບໃຈ




## ເຝິກອົບຮົມ...

(ຕໍ່ຈາກໜ້າ 1)

ນະຄອນຫຼວງວຽງຈັນ ເພື່ອກະກຽມ ແລະ ດຳເນີນການເລືອຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ປະຈຳເຂດເລືອກຕັ້ງ 1 ແລະສະພາປະຊາຊົນຂັ້ນນະຄອນຫຼວງວຽງຈັນ ຊຸດທີ V ໂດຍການເປັນປະທານຂອງທ່ານ ອານຸພາບ ຕຸນາລົມ ປະທານສະພາປະຊາຊົນນະຄອນຫຼວງ, ປະທານຄະນະກຳມະການເລືອກຕັ້ງນະຄອນຫຼວງວຽງຈັນ (ຄນວ), ມີທ່ານ ອາດສະພັງທອງ ສີພັນດອນ ເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາທ່ານຄະນະປະຈຳ ແລະ ກຳມະການພັກ ນວ, ຮອງປະທານ, ກຳມະການ ແລະ ອະນຸກຳມະການຊ່ວຍວຽກ ຄນວ ພ້ອມດ້ວຍຄະນະກຳມະການເລືອກຕັ້ງຂັ້ນເມືອງ ເຂົ້າຮ່ວມຫຼາຍກວ່າ 280 ທ່ານ.

ທ່ານອານຸພາບຕຸນາລົມ ກ່າວວ່າ: ການເຝິກອົບຮົມຄັ້ງນີ້ເພື່ອເຮັດໃຫ້ການກະກຽມແລະດຳເນີນການເລືອກຕັ້ງ ຖືກຕ້ອງຕາມເນື້ອໃນຈິດໃຈຊີ້ນຳຂອງກົມການເມືອງສູນກາງພັກ ວ່າດ້ວຍການເພີ່ມທະວີການຊີ້ນຳຂອງພັກຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ປະຈຳເຂດເລືອກຕັ້ງທີ 1 ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V ຕາມມະຕິສະບັບເລກທີ 26/ກມສພ, ລົງວັນທີ 12 ກັນຍາ 2025; ເພື່ອເຊື່ອມຊຶມບັນດາເອກະສານສຳຄັນກ່ຽວກັບການເລືອກຕັ້ງ,ແນະນຳການກະກຽມ ແລະ ດຳເນີນການເລືອກຕັ້ງໃຫ້ຖືກຕ້ອງຕາມກົດໝາຍ, ແລະ ມີຄວາມເປັນເອກະພາບແຕ່ຂັ້ນສູນກາງຮອດຂັ້ນທ້ອງຖິ່ນ; ເພື່ອສຶກສາອົບຮົມການເມືອງ-ແນວຄິດ ແລະ ປຸກລະດົມການເສີມຂະຫຍາຍຈິດໃຈຮັກຊາດ, ການໃຊ້ສິດປະຊາທິປະໄຕໃນການເລືອກຕັ້ງ, ຍົກສູງສະຕິຊາດ, ມີຄວາມເປັນເອກະພາບ ແລະ ຄວາມສາມັກຄີປອງດອງ, ມີສະຕິລະວັງຕົວ, ເປັນເຈົ້າການຕອບຕ້ານກົນອຸບາຍ ແລະ ການທຳລາຍຂອງພວກປໍລະປັກທີ່ຫວັງມ້າງເພທຳລາຍລະບອບໃໝ່ຂອງພວກເຮົາ.

ກອງປະຊຸມໄດ້ຮັບຟັງການເຜີຍແຜ່ເອກະສານສຳຄັນຄື: ເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍການເພີ່ມທະວີການນຳພາ-ຊີ້ນຳຂອງອົງຄະນະພັກທຸກຂັ້ນ ຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V; ເພີ່ມທະວີນຳພາແນວຄິດ ແລະ ເສີມຂະຫຍາຍສິດປະຊາທິປະໄຕຂອງປະຊາຊົນລາວບັນດາເຜົ່າ ເພື່ອການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V; ເນື້ອໃນສຳຄັນຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ເຊື່ອມຊຶມແຜນດຳເນີນງານຂອງຄະນະກຳມະການເລືອກຕັ້ງນະຄອນຫຼວງວຽງຈັນ ເພື່ອກະກຽມ ແລະ ດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ Xແລະສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V.

ຜູ້ເຂົ້າຮ່ວມໄດ້ເອົາໃຈໃສຄົ້ນຄວ້າ, ເຊື່ອມຊຶມ ແລະ ປະກອບຄວາມເຫັນຕໍ່ແຕ່ລະເນື້ອໃນ ເພື່ອຄວາມເຂົ້າໃຈເປັນເອກະພາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ.

**(ນາງ ກຸກກິກ ບຸດດາໄຊ)**



## ສຸກສະບາຍຫາຍໂຣຄ

# ໃບເຕີຍ ມີຄຸນປະໂຫຍດຫຼາຍກວ່າທີ່ຄິດ

**# ຮຽບຮຽງໂດຍ: ກະເດົາ**



ໃບເຕີຍ ສຳລັບຄົນທີ່ມັກຮັບປະທານເຂົ້າໜົມຄົງຮູ້ຈັກດີ ເພາະຖືກນຳໃຊ້ຫຼາຍໃນສ່ວນປະສົມຂອງເຂົ້າໜົມຫວານຕ່າງໆ ແລະ ອາຫານບາງເມນູເພື່ອເພີ່ມກິ່ນຫອມ; ໃບເຕີຍເປັນສະໝຸນໄພໄມ້ຢືນຕົ້ນຂະໜາດນ້ອຍທີ່ມີລັກສະນະເປັນພຸ່ມ-ເປັນກໍ ໃບດ່ຽວ ປົ່ງວຽນສະຫຼັບເປັນກຽວຈົນເຖິງຍອດ.

ໃບເຕີຍຖືກນຳໃຊ້ຢ່າງກວ້າງຂວາງໃນວົງການອາຫານລາວໂດຍສະເພາະແມ່ນປະເພດເຂົ້າໜົມຫວານ ເຊິ່ງສາມາດນຳໃຊ້ໄດ້ທັງໃບສົດ ແລະ ໃບແຫ້ງ; ພ້ອມນັ້ນ, ຍັງມີການນຳໃຊ້ເປັນຢາປິ່ນປົວພະຍາດແລະບັນເທົາອາການເຈັບປວດພາຍໃນ ແລະ ພາຍນອກຂອງຮ່າງກາຍຄົນເຮົາ.

ປັດຈຸບັນມີການວິໄຈພົບວ່າ ນ້ຳໃບເຕີຍມີປະໂຫຍດ ແລະມີ ຄວາມຈຳເປັນຫຼາຍຕໍ່ຮ່າງກາຍຂອງຄົນເຮົາ ເພາະໃບເຕີຍປະກອບດ້ວຍວິຕາມິນ ແລະ ແຮ່ທາດສຳຄັນຫຼາຍຊະນິດ ເຊັ່ນ: ເບຕ້າແຄໂຣທິນ, ວິຕາມິນ C, ວິຕາມິນ B, ທາດແຄລຊຽມ, ທາດເຫຼັກ ແລະ ທາດຟອສຟໍຣັສ ນອກຈາກນີ້, ຍັງມີໂປຣຕີນ ແລະ ໃຫ້ພະລັງງານແກ່ຮ່າງກາຍອີກດ້ວຍ. ໃນຕຳລາຢາພື້ນເມືອງໄດ້ນຳໃຊ້ໃບເຕີຍປິ່ນປົວພະຍາດທີ່ຄາດວ່າມີສາເຫດມາຈາກອະນຸມູນອິດສະຫຼະ ເຊັ່ນ:ພະຍາດເບົາຫວານ, ຫຼຸດຄວາມດັນເລືອດ, ຫອບຫືດ, ດັບພິດໄຂ້, ພະຍາດຜິວໜັງ, ພະຍາດຂໍ້ກະດູກ, ບັນເທົາອາການ, ປວດຕາມເສັ້ນເອັນ, ຊ່ວຍປິ່ນປົວອາການອັກເສບ, ຊ່ວຍປ້ອງກັນບໍ່ໃຫ້ເລືອດແຂງຕົວແລະ ຊ່ວຍບຳລຸງຜິວພັນໄດ້ອີກດ້ວຍ.

ນອກນັ້ນ, ໃບເຕີຍຍັງຊ່ວຍບຳລຸງຫົວໃຈແລະ ຊ່ວຍຫຼຸດອັດຕາການເຕັ້ນໄວຂອງຫົວໃຈ ເພາະວ່າການດື່ມນ້ຳໃບເຕີຍ ນອກຈາກຈະຊ່ວຍແກ້ຫິວກະຫາຍ ແລະ ຄາຍຄວາມຮ້ອນໄດ້ແລ້ວກິ່ນຫອມຂອງໃບເຕີຍ ຍັງຊ່ວຍເຮັດໃຫ້ຮ່າງກາຍແລະ ຈິດໃຈສົດຊື່ນ-ຜ່ອນຄາຍນຳອີກ.

**ຂໍ້ມູນຈາກ:**
**www.lnr.org.la**




# ປີໃໝ່ສາກົນ

**# ໄມ ແສງມະນີ**

❊ ປີເກົ່າກຽມຍ່າງຍ້າຍ
ປວງປະຊາຊົນລາວ
ແສນສຸກໃຈໂຮຮ້ອງ
ຄຶກຄື້ນໄປທົ່ວລ້າ

ປີໃໝ່ວຽນມາ
ທົ່ວເໜືອກາງໃຕ້
ສະຫລອງກັນມ່ວນຊື່ນ
ປະຊາຊ້ອຍຊື່ນບານ

❊ ວັນນີ້ທົ່ວເຂດແຄ້ນ
ໃຜກໍແສນສຸກສັນ
ປີໃໝ່ສາກົນເຂົ້າ
ພົບຈອດຂວບອີກຄັ້ງ

ແດນຕ່າງທາງໄກ
ພໍ່າກັນພຽງພ້ອມ
ມາເຢືອນຢາມຮອດ
ສະຫຼອງຕ້ອນຮັບເອົາ ທ່ານເອີຍ!

❊ ສາທຸເນີ! ປີໃໝ່ນີ້
ຂໍໃຫ້ຫລາຍຄົນມີ
ເງິນຄຳທອງຂອງໃຊ້
ສຸກສົມຫວັງມ່ວນແມ້ງ

ຂໍອ່ວຍພອນໄຊ
ເຫື່ອແຮງຫັນຫ້າວ
ໄຫລມາແໜ້ນອັ່ງ
ລວຍລົ້ນຮັ່ງມີ

❊ ສຸກຂີສົມມາດມຸ້ງ
ຊີບຊີວາຍືນຍາວ
ເຖົ້າທີ່ຄົນຂານເວົ້າ
ອາຍຸຍືນລື່ນລົ້ນ

ພະໄມຄິດປອງໝາຍ
ດັ່ງດຽວໂດຍດ້ານ
ພົນວັດສາຂວບຮອດ
ຄົນເວົ້າຊ່າລື

❊ ແບມືມາໃຫ້ທ່ານໄດ້
ລວຍຊັບສິນຖວາຍທານ
ຢ່າໄດ້ໝອງມົວເສົ້າ
ມີພະລັງແກ່ນເຂັ້ມ

ບາຍນັບເງິນຄຳ
ຊື່ສຽງໄກກ້ອງ
ໂສກາອຸກອັ່ງ
ສະເໜີຊ້າງຄູ່ເມືອງ ທ່ານເອີຍ!



## ສັກຂາຍ ລະຫາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສຽມທ້ຽນ**

❊ **1 ປີຜ່ານພົ້ນ** ຂໍສະແດງຄວາມ**ຊົມເຊີຍບັກຂ່າວສະພາປະຊາຊົນແຂວງ**ທົ່ວປະເທດ ທີ່ຂະຫຍັນຫັນຫ້າວ ຂຽນຂ່າວສົ່ງໃຫ້ໜັງສືພິມຜູ້ແທນປະຊາຊົນ ຢ່າງເປັນຂະບວນຟົດຟື້ນ ເຊິ່ງບາງເຂດບາງຄົນ ອົດທົນຂຽນ ແລະ ສົ່ງມາໃຫ້ທີມງານກົມສື່ມວນຊົນຂອງພວກເຮົາ ໃນໂມງເລີກການກໍມີ ສຸດທີ່ດີໃຈລົ້ນ ເຫັນຫຼາຍຄົນເອົາໃຈໃສ່ ຂຽນເນື້ອໃນກ່າວອ້າງ ຜົນງານສ້າງເຂດຕົນ ຈົນບໍ່ເຫັນຂາດແຫ້ງເນື້ອຂ່າວການເຄື່ອນໄຫວອອກໃຫ້ລຽນທຸກສະບັບບໍ່ປ່ອຍປະວາງໄວ້ ເນື້ອທີ່ໜັງສືພິມໃຫ້ ເຂດໃດຈັບຈອງ ຄອງແຂ້ມເຜີຍຂ່າວເນື້ອ ຜົນງານອ້າງອຽກເຄື່ອນໄຫວ **(ຊົມເຊີຍ)** ຂໍທັກທາຍເພີ່ນຜູ້ ເຫັນທ່າງການຂຽນ ຄັນຢູ່ດີມີແຮງ ໃຫ້ໝັ່ນຂຽນທະຍອຍໃຫ້ ໜັງສືພິມຜູ້ແທນປະຊາຊົນໄດ້ ບັນທຶກບານຂຽນຊື່ **ແດ່ທ້ອນ!** ຢ່າໄດ້ປະປ່ອຍໃຫ້ ໜັງສືພິມເສົ້າຫງ່ອມເຫງົາ **ທ່ານເອີຍ!**

❊ **ປິດສາກປີ 2025** ດ້ອຍຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາປະຊາຊົນແຂວງທົ່ວປະເທດ ມີເຫດການຕື່ນເຕັ້ນ ຍໍຍື່ນຂໍ້ມູນທາ **ແດ່ເນີ!** ພໍ່ວ່າມີອັນຂຽນ ທັກທາຍລະບາຍແຈ້ງ ໃນໜັງສືພິມພໍ່ໃຫ້ ຄົນທາງໄກເພີ່ນໄດ້ອ່ານ ຕິດຕາມຂ່າວອຽກບ້ານ ການເມືອງພ້ອມທົ່ວສະພາ **ນັ້ນແລ້ວ!**

## ຊວນຍິ້ມ

**# ພົ້ງດຶງ**

### ເລື່ອງ: ເລືອກຜິດ

ສາວຈ່ອຍເປັນຄົນບໍ່ມີຫູມາແຕ່ນ້ອຍ, ພໍເລີ່ມໃຫຍ່ເປັນສາວລາວກະເລີ່ມອາຍຈຶ່ງໄປຫາທ່ານໝໍເພື່ອສັບຍະກໍາ,ໝໍກໍເລີຍເອົາຫູຫຼາຍແບບມາໃຫ້ເລືອກ; ຈາກນັ້ນ, ກໍຜ່າຕັດຫຍິບໃຫ້. ພາຍຫຼັງດີຮຽບຮ້ອຍ ກໍໄປພົບທ່ານໝໍເພື່ອລາຍງານຜົນ

**ໝໍ:** ເປັນຈັ່ງໃດ, ຍິນສຽງແຈ້ງດີບໍ່?
**ສາວຈ່ອຍ:** ແຈ້ງ, ແຕ່ບໍ່ຮູ້ເລື່ອງ
**ໝໍ:** ໂອຍ! ຂໍອະໄພດອກ ເຈົ້າຟັງຫຍັງບໍ່ຄ່ອຍຮູ້ເລື່ອງ; ຂອງແນວຫວ່າເຈົ້າເລືອກເອົາຫູຜູ້ຊາຍ, ຂ້ອຍກະລືມສັງເກດ
**ສາວຈ່ອຍ:** ???

## ສຸພາສິດ-ຄະຕິເຕືອນໃຈ

**#ດອກຫຍ້າ**

ມະນຸດໃນລຸ່ມຟ້າ
ມີແຕ່ຕິທາງເຂົາ
ຄັນວ່າເຮົາດີແທ້
ຊື່ວດີຄົນເບິ່ງຮູ້

ໃຜບໍ່ທ່ອນຕິຕົນເອງ ດອກນາ!
ວ່າບໍ່ດີທັ້ງນັ້ນ
ຢ່າບິນຫາຄົນອື່ນ
ສຸຫາເລື້ອງໃສ່ກັນ

ລັດຖະສະພາຕ່າງປະເທດ

# ສະພາ Cyprus ຜ່ານຊຸດກົດໝາຍປະຕິຮູບພາສີ

(Xinhua) - ວັນທີ 22 ທັນວາຜ່ານມາ, ສະພາຜູ້ແທນປະຊາຊົນໄຊປຣັດ ໄດ້ອະນຸມັດຊຸດກົດໝາຍປະຕິຮູບພາສີຄັ້ງໃຫຍ່ ເຊິ່ງຈະມີຜົນບັງຄັບໃຊ້ໃນເດືອນມັງກອນ 2026.

ສະມາຊິກສະພາ ໄດ້ຜ່ານຮ່າງກົດໝາຍ 5 ສະບັບ ຈາກທັງໝົດ 6 ສະບັບທີ່ລັດຖະບານສະເໜີ ໂດຍມີການປ່ຽນແປງການເກັບພາສີສ່ວນບຸກຄົນ ແລະ ນິຕິບຸກຄົນ ແລະ ເພີ່ມມາດຕະການເຂັ້ມງວດເພື່ອຕໍ່ຕ້ານການຫຼີກລ່ຽງພາສີ; ວົງເງິນຍົກເວັ້ນພາສີລາຍໄດ້ສ່ວນບຸກຄົນ ຈະເພີ່ມຂຶ້ນເປັນ 22,000 ເອີໂຣ (25,874 ໂດລາ) ຈາກ 19,500 ເອີໂຣ, ຂະນະທີ່ອັດຕາພາສີນິຕິບຸກຄົນ ຈະເພີ່ມຂຶ້ນຈາກ 12.5 ເປັນ 15%.

ຊຸດກົດໝາຍນີ້ຍັງລວມເຖິງການຫຼຸດພາສີເງິນປັນຜົນ, ການຍົກເລີກອາກອນສະແຕມ (stamp) ສ່ວນໃຫຍ່ ແລະ ກົດລະບຽບໃໝ່ກ່ຽວກັບການເກັບພາສີກຳໄລຈາກສະກຸນເງິນດິຈິຕອນ(cryptocurrency)ແລະທາງເລືອກຫຼັກຊັບ (stock option).

ລັດຖະມົນຕີກະຊວງການເງິນ ມາຄິສ ເຄຣາຟໂນສ (Makis Keravnos) ກ່າວວ່າ ການປະຕິຮູບຄັ້ງນີ້ ມີຈຸດປະສົງເພື່ອສ້າງລະບົບພາສີທີ່ຍຸຕິທຳ ແລະແຂ່ງຂັນໄດ້ຫຼາຍຂຶ້ນ,ພ້ອມທັງສະໜັບສະໜູນຄົວເຮືອນ ແລະ ດຶງດູດການລົງທຶນຈາກຕ່າງປະເທດ.

ຊຸດກົດໝາຍນີ້ ຍັງໃຫ້ອຳນາດທີ່ຂະຫຍາຍຫຼາຍຂຶ້ນແກ່ເຈົ້າໜ້າທີ່ພາສີ ແລະ ກຳນົດໃຫ້ການຍື່ນພາສີ ເປັນພາກບັງຄັບສຳລັບບຸກຄົນທີ່ມີວຽກເຮັດງານທຳສ່ວນໃຫຍ່.

(1 ເອີໂຣ = 1.17 ໂດລາສະຫະລັດ).



# ຫວຽດນາມ ກຳນົດ 182 ເຂດ ສຳລັບການເລືອກຕັ້ງສະພາແຫ່ງຊາດ ແລະ ຈະຈັດກອງປະຊຸມຄັ້ງທຳອິດໃນເດືອນເມສາ




(Xinhua) - ຕາມການລາຍງານຂອງເວັບໄຊສະພາແຫ່ງຊາດຫວຽດນາມ ໃນວັນທີ 23 ທັນວາ 2025 ໃຫ້ຮູ້ວ່າ, ຫວຽດນາມ ຈະມີທັງໝົດ 182 ເຂດເລືອກຕັ້ງໃນທົ່ວປະເທດສຳລັບການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ XVI ທີ່ຈະມາເຖິງ.

ພາຍໃຕ້ມະຕິທີ່ລົງນາມໂດຍປະທານສະພາແຫ່ງຊາດ ເຈິ່ນ ແທ່ງ ເໝິນ ເມື່ອບໍ່ດົນມານີ້, ໄດ້ມີການກຳນົດເຂດເລືອກຕັ້ງ ແລະ ຈຳນວນສະມາຊິກສະພາແຫ່ງຊາດທີ່ຈະໄດ້ຮັບການເລືອກຕັ້ງ ສຳລັບທັງ 34 ແຂວງ ແລະ ນະຄອນທີ່ບໍລິຫານໂດຍສູນກາງ ໃນທົ່ວປະເທດ; ນະຄອນໂຮ່ຈິມິງ ມີເຂດເລືອກຕັ້ງ ແລະ ທີ່ນັ່ງຫຼາຍທີ່ສຸດ ໂດຍມີ 13 ເຂດ ແລະ ສສຊ 38 ຄົນ, ຮອງລົງມາຄືນະຄອນຫຼວງຮ່າໂນ້ຍ ມີ 11 ເຂດ ແລະ ສສຊ 32 ຄົນ.

ຕາມມະຕິສະພາແຫ່ງຊາດທີ່ຮັບຮອງໃນວັນທີ 21 ພຶດສະພາຜ່ານມາ, ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ XVI ແລະ ສະພາປະຊາຊົນທຸກຂັ້ນ ສຳລັບວາລະປີ 2026-2031 ຈະຈັດຂຶ້ນໃນວັນທີ 15 ມີນາ 2026, ແລະ ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດຊຸດໃໝ່ ຈະເລີ່ມດຳເນີນພາຍໃນ 60 ວັນພາຍຫຼັງສຳເລັດການເລືອກຕັ້ງ.

ສື່ມວນຊົນທ້ອງຖິ່ນລາຍງານເມື່ອວັນທີ 25 ທັນວາວ່າ, ສະພາແຫ່ງຊາດ ຊຸດທີ XVI ຄາດວ່າຈະເປີດກອງປະຊຸມຄັ້ງປະຖົມມະລຶກ ໃນວັນທີ 6 ເມສາ 2026 ເຊິ່ງຈະໃຊ້ເວລາປະມານ 22 ວັນລັດຖະການ ແລະ ແບ່ງອອກເປັນ 2 ໄລຍະ.

ໄລຍະທຳອິດ, ກຳນົດໄວ້ຕັ້ງແຕ່ວັນທີ 6-22 ເມສາ, ຈະສຸມໃສ່ກ່ຽວກັບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ໃນໄລຍະ 9 ວັນທຳອິດ, ຕາມດ້ວຍການສະເໜີແລະການອະພິປາຍກຸ່ມກ່ຽວກັບຮ່າງກົດໝາຍຫຼາຍສະບັບ; ໄລຍະທີ 2, ແຕ່ວັນທີ 11-21 ພຶດສະພາ, ຈະອະພິປາຍແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ໂຄງການຕິດຕາມກວດກາ, ແລະ ຄາດວ່າຈະມີການລົງຄະແນນສຽງຮັບຮອງເອົາຮ່າງກົດໝາຍ ແລະ ມະຕິຕ່າງໆ.

# ພັກກຳອຳນາດຂອງ Cote d'Ivoire ໄດ້ຮັບສຽງສ່ວນຫຼາຍໃນສະພາແຫ່ງຊາດ



(Xinhua) - ພັກການໂຮມຊຸມນຸມຂອງກຸ່ມ Houphouetists ເພື່ອປະຊາທິປະໄຕ ແລະ ສັນຕິພາບ (Rally of Houphouetists for Democracy and Peace - RHDP) ເຊິ່ງເປັນພັກລັດຖະບານຂອງສາທາລະນະລັດກົດດີວົວ ໄດ້ຮັບສຽງສ່ວນຫຼາຍຢ່າງຖ້ວມລົ້ນໃນສະພາແຫ່ງຊາດ (ສະພາຕໍ່າ) ໂດຍໄດ້ 197 ຈາກທັງໝົດ 255 ທີ່ນັ່ງ ຫຼັງຈາກການເລືອກຕັ້ງສະພານິຕິບັນຍັດເມື່ອວັນເສົາທີ 27 ທັນວາ, ຄະນະກຳມະການເລືອກຕັ້ງເອກະລາດ (Independent Electoral Commission-CEI) ກ່າວໃນວັນຈັນທີ 29 ທັນວາຜ່ານມາ.

ໃນ 205 ເຂດເລືອກຕັ້ງໃນທົ່ວປະເທດ, RHDP ນຳໂດຍປະທານາທິບໍດີອະລາສຊານ ອູອັດຕາຣາ (Alassane Ouattara) ຊະນະ 155 ເຂດ ລວມທັງໝົດ 197 ທີ່ນັ່ງ; ພັກປະຊາທິປະໄຕແຫ່ງກົດດີວົວ ໄດ້ຮັບ 32 ທີ່ນັ່ງ ໃນ 25 ເຂດ, ຮັກສາຖານະເປັນພັກຝ່າຍຄ້ານຕົ້ນຕໍ; ໃນຂະນະທີ່ພັກປະຊາຊົນອາຟຣິກາແຫ່ງກົດດີວົວບໍ່ໄດ້ສົ່ງຜູ້ສະໝັກລົງແຂ່ງຂັນເນື່ອງຈາກຂວໍ້າບາດການເລືອກຕັ້ງ; ນອກຈາກນີ້, ຜູ້ສະໝັກຮັບເລືອກຕັ້ງເອກະລາດ ໄດ້ຮັບ 23 ທີ່ນັ່ງ ຫຼັງຈາກຊະນະໃນ 22 ເຂດ.

ອັດຕາການລົງຄະແນນສຽງໃນການເລືອກຕັ້ງຄັ້ງນີ້ ຢູ່ທີ່ 35.04%, ຫຼຸດລົງປະມານ 2.8% ເມື່ອທຽບໃສ່ປີ 2021.

# ສະພາແຫ່ງຊາດ Venezuela ຜ່ານກົດໝາຍປົກປ້ອງເສລີພາບໃນການເດີນເຮືອແລະການຄ້າ



(Xinhua) - ວັນອັງຄານທີ 23 ທັນວາຜ່ານມາ, ສະພາແຫ່ງຊາດເວເນຊູເອລາ ໄດ້ຜ່ານກົດໝາຍໂດຍມີຈຸດປະສົງເພື່ອຮັບປະກັນ ແລະ ປົກປ້ອງເສລີພາບໃນການເດີນເຮືອ ແລະ ການຄ້າ ຈາກການປຸ້ນໃນທ້ອງທະເລ, ການປິດລ້ອມແລະການກະທຳຜິດກົດໝາຍສາກົນອື່ນໆ ຫຼັງຈາກທີ່ສະຫະລັດອາເມລິກາຍຶດເຮືອບັນທຸກນໍ້າມັນຂອງເວເນຊູເອລາ ໃນທະເລຄາຣິບບຽນ (Caribbean).

"ກົດໝາຍວ່າດ້ວຍການຮັບປະກັນເສລີພາບໃນການເດີນເຮືອແລະການຄ້າຈາກການປຸ້ນໃນທ້ອງທະເລ, ການປິດລ້ອມ ແລະ ການກະທຳຜິດກົດໝາຍສາກົນອື່ນໆ" ໄດ້ຮັບການປະກາດອະນຸມັດໂດຍປະທານສະພາແຫ່ງຊາດຮໍຣ໌ເກ ໂຣດຣິເກຊ (Jorge Rodriguez) ຫຼັງຈາກການລົງຄະແນນສຽງ.

ກົດໝາຍສະບັບນີ້ ໄດ້ຮັບການຮັບຮອງເອົາໃນລະຫວ່າງກອງປະຊຸມສະໄໝວິສາມັນ ແລະ ພາຍໃຕ້ຂັ້ນຕອນອັນຮີບດ່ວນ ພາຍຫຼັງທີ່ສະຫະລັດຍຶດເຮືອບັນທຸກນໍ້າມັນຂອງເວເນຊູເອລາໃນເຂດທະເລຫຼວງ; ກົດໝາຍດັ່ງກ່າວ ກຳນົດໂທດຈຳຄຸກສູງສຸດ 20 ປີ ສຳລັບຜູ້ທີ່ສົ່ງເສີມ ຫຼື ສະໜອງທຶນສະໜັບສະໜູນສິ່ງທີ່ກົດໝາຍລະບຸວ່າເປັນການປຸ້ນໃນທ້ອງທະເລຫຼືການປິດລ້ອມ; ກົດໝາຍມີຈຸດປະສົງເພື່ອປົກປ້ອງຄວາມສຳພັນດ້ານການຄ້າ ແລະ ການເມືອງຂອງເວເນຊູເອລາ ຈາກສິ່ງທີ່ທາງການລະບຸວ່າເປັນໄພຂົ່ມຂູ່ຈາກສະຫະລັດ.

ເມື່ອວັນຈັນ, ສະພາແຫ່ງຊາດໄດ້ອະນຸມັດຮ່າງກົດໝາຍສະບັບນີ້ໃນການອ່ານຄັ້ງທຳອິດ, ຫຼັງຈາກທີ່ປະທານາທິບໍດີເວເນຊູເອລາ ນິໂຄລາສ ມາດູໂຣ (Nicolas Maduro) ໄດ້ສະເໜີຂຶ້ນມາເປັນສ່ວນໜຶ່ງຂອງຄວາມພະຍາຍາມເພື່ອປົກປັກຮັກສາອະທິປະໄຕຂອງຊາດ.

# ສະພາແຫ່ງຊາດ ສ.ເກົາຫຼີ ຜ່ານຮ່າງກົດໝາຍ ສ້າງຕັ້ງສານພິເສດພິຈາລະນາຄະດີກະບົດ




(Xinhua) - ວັນທີ 23 ທັນວາຜ່ານມາ, ສະພາແຫ່ງຊາດ ສ.ເກົາຫຼີ ໄດ້ຜ່ານຮ່າງກົດໝາຍສ້າງຕັ້ງສານພິເສດສະເພາະກິດເພື່ອພິຈາລະນາຄະດີກະບົດທີ່ເກີດຈາກການປະກາດໃຊ້ກົດໄອຍະການເສິກທີ່ຜິດພາດຂອງອະດີດປະທາ ນາທິບໍດີ ຢຸນຊຸກ-ຢອນ (Yoon Suk-yeol) ເມື່ອຕົ້ນເດືອນທັນວາ 2024, ຮ່າງກົດໝາຍດັ່ງກ່າວຜ່ານການອະນຸມັດຈາກສະພາແຫ່ງຊາດ ເຊິ່ງນຳໂດຍພັກປະຊາທິປະໄຕ.

ຮ່າງກົດໝາຍທີ່ສະເໜີໂດຍພັກປະຊາທິປະໄຕ ກຳນົດໃຫ້ສ້າງຕັ້ງຄະນະຜູ້ພິພາກສາຢ່າງໜ້ອຍ 2 ຄະນະ ໃນສານເຂດສູນກາງນະຄອນຫຼວງເຊອູນ ແລະ ສານສູງນະຄອນຫຼວງເຊອູນ ເພື່ອພິຈາລະນາຄະດີກະບົດ; ນອກຈາກນີ້, ຍັງກຳນົດໃຫ້ມີການແຕ່ງຕັ້ງຜູ້ພິພາກສາຢ່າງໜ້ອຍ 2 ຄົນ ໃນສານເຂດສູນກາງນະຄອນຫຼວງເຊອູນ ເພື່ອຮັບຜິດຊອບກວດ ຄືນວ່າຄວນອອກໝາຍຄົ້ນ, ການຍຶດຊັບສິນ, ການຈັບກຸມ ແລະ ການກັກຂັງ ທີ່ກ່ຽວຂ້ອງກັບການສືບສວນຄະດີກະບົດ ຫຼືບໍ່.

ຈະມີການສ້າງຕັ້ງຄະນະຜູ້ພິພາກສາພິເສດຂຶ້ນຢູ່ສານລະດັບເຂດ, ແຕ່ຄະນະຜູ້ພິພາກສາຊຸດທຳອິດໃນປັດຈຸບັນຈະຍັງສືບຕໍ່ພິຈາລະນາຄະດີກໍ່ຈະລາຈົນຂອງຢຸນ ເນື່ອງຈາກຄະດີດັ່ງກ່າວຢູ່ລະຫວ່າງດຳເນີນການຢູ່ແລ້ວ.

ພັກພະລັງປະຊາຊົນ ເຊິ່ງເປັນພັກຝ່າຍຄ້ານຕົ້ນຕໍຄັດຄ້ານເລື່ອງນີ້ ໂດຍກ່າວວ່າເປັນຄວາມພະຍາຍາມທີ່ຈະຍຶດອຳນາດຄວບຄຸມຝ່າຍຕຸລາການ.

# ຈີນ ຮ່າງກົດໝາຍສົ່ງເສີມກິດຈະກຳໃນເຂດຂົ້ວໂລກ ແລະ ຄວາມໝັ້ນຄົງໃນ Antarctica

(Chinadaily) - ບັນດາສະມາຊິກສະພາຜູ້ແທນປະຊາຊົນທົ່ວປະເທດຈີນ (NPC) ກຳລັງພິຈາລະນາຮ່າງກົດໝາຍທີ່ກ່ຽວຂ້ອງກັບກິດຈະກຳການປົກປັກຮັກສາສິ່ງແວດລ້ອມໃນທະວີບແອນຕາກຕິກາ, ຂະນະທີ່ປະເທດຊາດເລັ່ງຄວາມພະຍາຍາມທີ່ຈະເພີ່ມທະວີຄວາມສາມາດຂອງຕົນໃນກິດຈະກຳຢູ່ເຂດຂົ້ວໂລກແລະ ມີສ່ວນຮ່ວມໃນການຄຸ້ມຄອງຄວາມໝັ້ນຄົງລະດັບໂລກຂອງທະວີບນີ້; ຮ່າງກົດໝາຍດັ່ງກ່າວ ປະກອບດ້ວຍ 7 ໝວດ ແລະ 57 ມາດຕາ ໄດ້ຖືກນຳສະເໜີຕໍ່ກອງປະຊຸມຄະນະປະຈຳ NPC ເຊິ່ງເປັນສະພານິຕິບັນຍັດສູງສຸດຂອງຈີນ ໃນວັນຈັນທີ 22 ທັນວາ 2025 ເພື່ອພິຈາລະນາໃນວາລະທຳອິດ.

ແອນຕາກຕິກາ ຍັງຄົງເປັນທະວີບດຽວທີ່ບໍ່ມີການອ້າງສິດອະທິປະໄຕຢ່າງຈະແຈ້ງ, ສ່ວນຫຼາຍແມ່ນບໍລິຫານໂດຍກົນໄກລະຫວ່າງປະເທດ ເຊັ່ນກອງປະຊຸມປຶກສາຫາລືສົນທິສັນຍາແອນຕາກຕິກາ; ການບໍລິຫານແອນຕາກຕິກາໃນລະດັບນານາຊາດສ່ວນໃຫຍ່ ແມ່ນຂຶ້ນກັບຄວາມສາມາດຂອງແຕ່ລະປະເທດໃນການດຳເນີນກິດຈະກຳຢູ່ແອນຕາກຕິກາ ແລະ ອິດທິພົນຂອງປະເທດນັ້ນໆ ໃນການສ້າງຂອບກົດໝາຍສາກົນ ແລະ ບັນທັດຖານທາງພຶດຕິກຳ.




ໂດຍຄຳນຶງເຖິງຂໍ້ກຳນົດຂອງສົນທິສັນຍາສາກົນ ແລະ ຄວາມຕ້ອງການສະເພາະຂອງການຄຸ້ມຄອງກິດຈະກຳຂອງຈີນຢູ່ແອນຕາກຕິກາ, ຮ່າງກົດໝາຍນີ້ ໄດ້ກຳນົດກົດລະບຽບສຳລັບການສຳຫຼວດ, ການປະມົງ, ການທ່ອງທ່ຽວ ແລະ ການຂົນສົ່ງທາງເຮືອໃນທະວີບ; ກົດລະບຽບດັ່ງກ່າວ ໃຊ້ບັງຄັບກັບພົນລະເມືອງຈີນທີ່ດຳເນີນກິດຈະກຳເຫຼົ່ານີ້, ເຊັ່ນດຽວກັນກັບບຸກຄົນຕ່າງປະເທດທີ່ຈັດກິດຈະກຳໃນແອນຕາກຕິກາພາຍໃນສິດອຳນາດສານຕາມເຂດແດນຂອງຈີນ ຫຼື ເລີ່ມຕົ້ນການເດີນທາງເພື່ອສຳຫຼວດແອນຕາກຕິກາຈາກປະເທດຈີນ.

ຮ່າງກົດໝາຍສະບັບນີ້ ສະເໜີໃຫ້ກິດຈະກຳຢູ່ແອນຕາກຕິກາຄວນຍຶດໝັ້ນໃນຫຼັກການໃຊ້ປະໂຫຍດໂດຍສັນຕິ, ການປົກປັກຮັກສາສິ່ງແວດລ້ອມ, ການອະນຸລັກຊັບພະຍາກອນ, ການສະໜັບສະໜູນດ້ານວິທະຍາສາດແລະເຕັກໂນໂລຊີ, ແລະ ການຮ່ວມມືສາກົນເພື່ອປົກປ້ອງຜົນປະໂຫຍດລວມຂອງມວນມະນຸດ; ຮ່າງກົດໝາຍດັ່ງກ່າວໄດ້ລະບຸວ່າ, ນອກຈາກການຄົ້ນຄວ້າວິທະຍາສາດ ຫຼື ຈຸດປະສົງສັນຕິພາບອື່ນໆ, ການເຄື່ອນໄຫວໃດໆທີ່ກ່ຽວຂ້ອງເຖິງການທະຫານຢູ່ເກາະແອນຕາກຕິກາແມ່ນຖືກຫ້າມ ເຊັ່ນດຽວກັບກິດຈະກຳທີ່ກ່ຽວຂ້ອງກັບຊັບພະຍາກອນແຮ່ທາດ ກໍບໍ່ໄດ້ຮັບອະນຸຍາດ, ຍົກເວັ້ນສຳລັບຈຸດປະສົງການຄົ້ນຄວ້າວິທະຍາສາດ.

ຖະແຫຼງການລະບຸວ່າ, ປະເທດຈີນ ສະໜັບສະໜູນການພັດທະນາໂຄງການຕ່າງໆຢູ່ແອນຕາກຕິກາ, ສົ່ງເສີມການດຳເນີນກິດຈະກຳຢູ່ແອນຕາກຕິກາ ທີ່ເປັນມິດກັບສິ່ງແວດລ້ອມແລະ ຫຼຸດການປ່ອຍທາດກາກບອນຕ່ຳ, ແລະ ສະໜັບສະໜູນການຄົ້ນຄວ້າພື້ນຖານ ແລະ ນະວັດຕະກຳທາງເຕັກໂນໂລຊີໃນພາກພື້ນນີ້.

# ສະພາ Algeria ອະນຸມັດກົດໝາຍປະກາດວ່າ ການລ່າອານານິຄົມຂອງຝຣັ່ງເປັນອາຊະຍາກຳ




(Xinhua) - ຕາມການລາຍງານຂອງສຳນັກຂ່າວແຫ່ງລັດອານເຊຣີ (APS) ໃຫ້ຮູ້ວ່າ: ລັດຖະສະພາອານເຊຣີ ໄດ້ອະນຸມັດກົດໝາຍຢ່າງເປັນເອກະສັນປະກາດວ່າການລ່າອານານິຄົມຂອງຝຣັ່ງໃນປະເທດ ລະຫວ່າງປີ 1830-1962 ເປັນອາຊະຍາກຳ ແລະ ຮຽກຮ້ອງໃຫ້ຝຣັ່ງຂໍໂທດ ແລະ ຊົດເຊີຍຢ່າງເປັນທາງການ.

ກົດໝາຍ 27 ມາດຕາ ທີ່ຜ່ານເມື່ອວັນທີ 24 ທັນວາຜ່ານມາ ໄດ້ກຳນົດຄວາມຮັບຜິດຊອບທາງກົດໝາຍຂອງລັດຝຣັ່ງຕໍ່ອະດີດການລ່າອານານິຄົມ ແລະ ລະບຸກົນໄກໃນການສະແຫວງຫາການຍອມຮັບຢ່າງເປັນທາງການ ແລະ ການຂໍໂທດສຳລັບອາຊະຍາກຳໃນຍຸກອານານິຄົມ ເຊິ່ງເປັນເງື່ອນໄຂເບື້ອງຕົ້ນສຳລັບການປອງດອງທາງປະຫວັດສາດ; ກົດໝາຍສະບັບນີ້ລະບຸການກະທຳຜິດຕ່າງໆ ລວມທັງການທົດລອງນິວເຄລຍ, ການຂ້ານອກສານ ຫຼື ການສັງຫານໂດຍບໍ່ຜ່ານຂະບວນການຍຸຕິທຳ (extrajudicial killing), ການທໍລະມານ ແລະ "ການປຸ້ນຊັບພະຍາກອນຢ່າງເປັນລະບົບ", ຂະນະດຽວກັນ ກໍຢືນຢັນສິດຂອງອານເຊຣີ ໃນການຮັບ "ການຊົດເຊີຍຢ່າງຄົບຖ້ວນ ແລະ ເປັນທຳ" ສຳລັບຄວາມເສຍຫາຍທາງດ້ານວັດຖຸແລະ ທາງດ້ານຈິດໃຈທັງໝົດ.

ກົດໝາຍດັ່ງກ່າວ ຮ່າງຂຶ້ນໃນເດືອນພຶດສະພາ ໂດຍຄະນະກຳມະການລັດຖະສະພາທີ່ສ້າງຕັ້ງຂຶ້ນໃນເດືອນມີນາ2025 ເຊິ່ງເປັນຕົວແທນຂອງກຸ່ມການເມືອງຕົ້ນຕໍຂອງອານເຊຣີ; ໃນເວລານັ້ນ, ບຣາຮິມ ບູກາລີ (Brahim Boughali) ປະທານສະພາປະຊາຊົນແຫ່ງຊາດ (ສະພາຕ່ຳ) ໄດ້ອະທິບາຍກົດໝາຍສະບັບນີ້ ວ່າເປັນ "ໜ້າທີ່ທາງສິນທຳແລະ ທາງປະຫວັດສາດ" ເພື່ອເປັນກຽດແກ່ການເສຍສະຫຼະຂອງປະຊາຊົນອານເຊຣີແລະ ສະແຫວງຫາຄວາມຈິງ.

ເຖິງແມ່ນວ່າຈະມີສຽງຮຽກຮ້ອງໃຫ້ມີກົດໝາຍເຊັ່ນນີ້ມາຕັ້ງແຕ່ປີ 1984, ແຕ່ຄວາມພະຍາຍາມກ່ອນໜ້ານີ້ ລວມທັງຂໍ້ສະເໜີໃນປີ 2001 ກໍປະສົບກັບຄວາມຊັກຊ້າຊ້ຳແລ້ວຊ້ຳອີກ; ປະເດັນນີ້ ກັບມາປາກົດອີກຄັ້ງໃນປີ 2005 ຫຼັງຈາກກົດໝາຍຂອງຝຣັ່ງທີ່ກຳນົດໃຫ້ໂຮງຮຽນສອນ "ບົດບາດໃນທາງບວກ" ຂອງລັດທິອານານິຄົມ ເຊິ່ງເປັນກົດໝາຍທີ່ກໍ່ໃຫ້ເກີດການໂຕ້ຖຽງ. ຮອດປີ 2021, ມີສະມາຊິກສະພານິຕິບັນຍັດອານເຊຣີກວ່າ 100 ຄົນ ໃຫ້ການສະໜັບສະໜູນຮ່າງກົດໝາຍຫ້າມເຮັດຂໍ້ຕົກລົງກັບຝຣັ່ງ ຈົນກວ່າຝຣັ່ງຈະຍອມຮັບຄວາມຜິດໃນອາຊະຍາກຳຍຸກອານານິຄົມ.

ສະມາຊິກສະພານິຕິບັນຍັດ, ນັກປະຫວັດສາດ ແລະ ຜູ້ຊ່ຽວຊານດ້ານກົດໝາຍ ຕ່າງຢືນຢັນມາດົນແລ້ວວ່າ ຕ້ອງມີການຂໍໂທດຢ່າງເປັນທາງການຕໍ່ຄວາມໂຫດຮ້າຍຕ່າງໆ ເຊັ່ນການສັງຫານໝູ່ທີ່ Dahra ໃນປີ 1845 ເຊິ່ງທະ ຫານຝຣັ່ງສັງຫານຊາວອານເຊຣີຫຼາຍຮ້ອຍຄົນ ດ້ວຍການຣົມຄວັນໄລ່ພວກເຂົາອອກຈາກຖ້ຳບ່ອນຫຼົບໄພ; ພວກເຂົາຍັງຊີ້ໃຫ້ເຫັນເຖິງການທົດລອງນິວເຄລຍໃນທະເລຊາຍຊາຮາຣາ ເຊິ່ງເຮັດໃຫ້ປະຊາກອນໃນເຂດດັ່ງກ່າວໄດ້ຮັບລັງສີຮຸນແຮງ, ຊາວອານເຊຣີຈຳນວນຫຼາຍຍັງປະສົບກັບຜົນສະທ້ອນດ້ານສຸຂະພາບທີ່ເກີດຂຶ້ນຈົນເຖິງທຸກວັນນີ້.

ຄວາມແຕກແຍກທາງການທູດລະຫວ່າງອານເຊຣີແລະຝຣັ່ງ ໄດ້ທະວີຄວາມຮຸນແຮງຂຶ້ນໃນໄລຍະຫຼາຍເດືອນທີ່ຜ່ານມານີ້ ໂດຍມີສາເຫດມາຈາກຂໍ້ໂຕ້ຖຽງກ່ຽວກັບການເຂົ້າເມືອງ, ຄວາມບໍ່ພໍໃຈໃນອະດີດ ແລະ ການທີ່ຝຣັ່ງສະໜັບສະໜູນປະເທດມາຣົກ ກ່ຽວກັບຊາຮາຣາຕາເວັນຕົກ; ປະທານາທິບໍດີອານເຊຣີ ອັບເດລມາຈິດ ເຕບບູນ (Abdelmadjid Tebboune) ຢືນຢັນວ່າ ການເຈລະຈາໂດຍກົງກັບປະທານາທິບໍດີຝຣັ່ງ ເອັມມານູເອລ ມາຄຣົງ ແມ່ນວິທີດຽວທີ່ຈະແກ້ໄຂບັນຫາສອງຝ່າຍເຫຼົ່ານີ້ໄດ້.

ໃນປີ 2021, ມາຄຣົງ ຍອມຮັບວ່າການລ່າອານານິຄົມໃນອານເຊຣີ ເປັນ "ອາຊະຍາກຳຕໍ່ມະນຸດຊາດ", ແຕ່ເຂົາກໍບໍ່ໄດ້ກ່າວຂໍໂທດຢ່າງເປັນທາງການຈາກລັດຖະບານ.

ດ້ານກະຊວງການຕ່າງປະເທດຝຣັ່ງ ໄດ້ອອກຖະແຫຼງການກ່າວປະນາມການອະນຸມັດກົດໝາຍດັ່ງກ່າວຂອງລັດຖະສະພາອານເຊຣີວ່າເປັນການກະທຳທີ່ສວນທາງກັບ "ຄວາມຕັ້ງໃຈທີ່ຈະຟື້ນຟູການເຈລະຈາລະຫວ່າງຝຣັ່ງ ກັບ ອານເຊຣີ ແລະ ການຫຼຸດຄວາມເຄັ່ງຕຶງໃນການຫາລືປະເດັນທາງປະຫວັດສາດ".

ການທີ່ຝຣັ່ງເຄີຍມີຖານະເປັນເຈົ້າອານານິຄົມຂອງອານເຊຣີ ລະຫວ່າງປີ 1830-1962 ຍັງຄົງເປັນປະເດັນອ່ອນໄຫວໃນການພົວພັນລະຫວ່າງສອງປະເທດ ເນື່ອງຈາກໄລຍະເວລາດັ່ງກ່າວ ເຕັມໄປດ້ວຍການສັງຫານໝູ່ ແລະ ການເນລະເທດປະຊາຊົນຄັ້ງໃຫຍ່, ຈົນນຳໄປສູ່ສົງຄາມປະກາດເອກະລາດອັນນອງເລືອດ ທີ່ເກີດຂຶ້ນລະຫວ່າງປີ 1954 -1962; ເຖິງແມ່ນອານເຊຣີຢືນຢັນວ່າສົງຄາມກາງເມືອງຄັ້ງນັ້ນ ໄດ້ຂ້າຊີວິດຜູ້ຄົນປະມານ 1.5ລ້ານ, ແຕ່ນັກປະຫວັດສາດຝຣັ່ງຫຼາຍຄົນປະເມີນຕົວເລກຕ່ຳກວ່ານັ້ນ ວ່າຢູ່ທີ່ປະມານ 500,000 ໃນຈຳນວນນີ້ ມີປະມານ 400,000 ແມ່ນຊາວອານເຊຣີ.

# ເບິ່ງໄວ້ ໄດ້ບົດຮຽນ

# ຄຳຮ້ອງທຸກ ຕ້ອງເປັນໄປຕາມລະບຽບກົດໝາຍ

❖ ວິເສດ ສະແຫວງສຶກສາ

ຂ່າວເກົ່າໆແຕ່ເອົາມາເວົ້າໃໝ່ເປັນບົດຮຽນນີ້ ເກີດຂຶ້ນຢູ່ປະເທດອິນເດຍ ເມື່ອປະມານ 8 ປີຜ່ານມາ (ໜັງສືພິມວຽງຈັນທາມ 18 ມັງກອນ 2017) ເປັນເລື່ອງຂະບວນການຮ້ອງທຸກທີ່ເຮັດແບບຊະຊາຍຢູ່ກອງທັບອິນເດຍ. ເລື່ອງມີຢູ່ວ່າ ໃນເວລານັ້ນ ໄດ້ມີການເຜີຍແຜ່ຄຳຮ້ອງທຸກຄຳຕໍ່ວ່າຕໍ່ຂານຈາກເຫຼົ່າທະຫານຊັ້ນຜູ້ນ້ອຍກ່ຽວກັບສະພາບການເປັນຢູ່, ອາຫານການກິນ ແລະ ເງິນເດືອນບໍ່ພໍຈ່າຍ; ໃນນັ້ນ, ມີສອງກໍລະນີທີ່ຮ້ອນໄປເຖິງລັດຖະບານອິນເດຍ ເຖິງຂັ້ນມີການອອກຄຳສັ່ງໃຫ້ສອບສວນຄວາມເປັນຈິງທີ່ເກີດຂຶ້ນ. ເລື່ອງຂອງເລື່ອງມີຢູ່ວ່າ: ມີພົນທະຫານຄົນໜຶ່ງ ໄດ້ເຜີຍແຜ່ທາງສື່ສັງຄົມອອນລາຍ ກ່ຽວກັບຜູ້ເປັນນາຍໄດ້ຂູດຮີດໃຊ້ແຮງງານຕົນ ແບບຂ້າທາດ ເຊັ່ນ: ໃຫ້ຊັກເຄື່ອງ, ຖູເຮືອນ, ເກືອໝາ, ຈູງໝາອອກໄປເລາະຂີ້ທາງນອກ ແລະ ອື່ນໆເຊິ່ງບໍ່ພົວພັນກັບໜ້າທີ່ຂອງທະຫານ; ມີທະຫານຊັ້ນຜູ້ນ້ອຍອີກຄົນໜຶ່ງ ຈົ່ມທຸກທາງອອນລາຍກ່ຽວກັບອາຫານທີ່ບໍ່ໄດ້ເລື່ອງ ແລະ ຂາດໆເຂີນໆ, ເລື່ອງເຄື່ອງນຸ່ງ ແລະ ສະພາບຄວາມເປັນຢູ່ທີ່ຕໍ່າຕ້ອຍນ້ອຍໜ້າ. ເວົ້າໄດ້ວ່າໃນເວລານັ້ນ ການຮ້ອງທຸກຂອງພົນທະຫານເກີດຂຶ້ນແບບຕິດຕໍ່ນເນື່ອງ. ເມື່ອເຫັນວ່າການຮ້ອງທຸກທາງອອນລາຍຈະກາຍເປັນໄຟລາມປ່າ, ຜູ້ບັນຊາການທະຫານສູງສຸດໃນເວລານັ້ນຄື ນາຍພົນ ບິປິນ ຣາວັດ (Bipin RAWAT) ເລີຍອອກມາກ່າວເຕືອນໃຫ້ຢຸດເຕືອນລະບາຍຄວາມຂັດຂ້ອງໝອງໃຈຜ່ານສື່ສັງຄົມອອນລາຍ ເພາະເປັນເລື່ອງຜິດຈັນຍາບັນ ແລະ ຄຸນສົມບັດຂອງທະຫານອິນເດຍ ເຊິ່ງຜູ້ລະເມີດຈະຖືກຖືວ່າມີຄວາມຜິດຖານກໍ່ອາຊະຍາກຳ; ທ່ານນາຍພົນກ່າວຕື່ມວ່າ ທາງກອງທັບມີຊ່ອງທາງ ແລະ ກົນໄກ ເພື່ອໃຫ້ເຫຼົ່າທະຫານສະເໜີຄຳຄິດຄຳເຫັນ ຫຼື ເລື່ອງທີ່ຂັດຂ້ອງໝອງໃຈ, ການຮ້ອງທຸກຕ້ອງເປັນໄປຕາມຂັ້ນຕອນ ແລະ ລະບຽບການ, ຈະເຮັດຕາມອຳເພີໃຈຜ່ານສື່ສັງຄົມອອນລາຍບໍ່ໄດ້ເດັດຂາດ.

ທ່ານໄດ້ປິດທ້າຍດ້ວຍຄຳເວົ້າເດັດໆວ່າ: "ຖ້າສະເໜີຜ່ານຂັ້ນຕອນ ແລະ ກົນໄກທີ່ມີຢູ່ແລ້ວ ແຕ່ຜູ້ຮ້ອງທຸກຍັງບໍ່ພໍໃຈ ເພາະເຫັນວ່າຄຳສະເໜີຂອງຕົນບໍ່ຖືກແກ້ໄຂ ກໍຂໍເຊີນຂຶ້ນມາຫາຂ້າພະເຈົ້າຜູ້ບັນຊາການໂດຍກົງໂລດ!" ເວົ້າແທ້ກໍແມ່ນຄວາມທ່ານນາຍພົນ ບິປິນ ຣາວັດ ເພາະການຮ້ອງທຸກນັ້ນ ບໍ່ຄວນເຮັດມະລຳມະລອຍຕາມອາລົມ.

ຂໍປິດທ້າຍບົດນີ້ດ້ວຍຂ່າວຍ່ອຍຈາກປະເທດອັງກິດຫວ່າງມໍ່ໆມານີ້ ກ່ຽວກັບມາດຕະການປ້ອງກັນບໍ່ໃຫ້ປັນຍາປະດິດ ມາຍາດວຽກເຮັດ ອັນຈະເຮັດໃຫ້ຄົນເປັນໆ ຄືພວກເຮົາ ພາກັນວ່າງງານ; ໃນປັດຈຸບັນ, ມີຫຼາຍຄົນພວມເກີດສະພາບຮ້ອນໆໜາວໆຢ້ານປັນຍາປະດິດ ຫຼື ເອໄອ (AI) ມາຍາດວຽກຂອງມະນຸດ; ຄວາມຢ້ານດັ່ງກ່າວ ສາມາດເກີດເປັນຈິງໄດ້ຖ້າຂາດມາດຕະການຄວບຄຸມໄວ້ແຕ່ຫົວທີ. ສ່ວນຢູ່ປະເທດອັງກິດນັ້ນ ເພິ່ນໄດ້ມີການກະກຽມປ້ອງກັນໄວ້ແລ້ວ ດ້ວຍ 3 ວິທີ ຄື: ໜຶ່ງ ຂຶ້ນບັນຊີຕຳແໜ່ງງານທີ່ບໍ່ຟ້າວຮີບຮ້ອນໃຊ້ AI ເຮັດເຊັ່ນ: ໜ້າວຽກທີ່ງ່າຍດາຍ; ສອງ ສຶກສາລະອຽດກຸ່ມແຮງງານທີ່ມີຄວາມສ່ຽງຖືກ AI ຍາດວຽກໄປເຮັດເຊັ່ນ: ໜ້າວຽກຂອງແມ່ຍິງ, ຊາວໜຸ່ມ ແລະ ຜູ້ດ້ອຍໂອກາດ ແລະ ສາມ ຕ້ອງຮີບຮ້ອນສ້າງພື້ນຖານທາງນິຕິກຳຄວບຄຸມການນຳໃຊ້ AI ເຂົ້າໃນຕຳແໜ່ງງານຕ່າງໆ.




#ບ່າວກະບື

ຫຼັງຈາກແຕ່ງດອງກັນແລ້ວບໍ່ພໍຄາວ, ຝ່າຍຍິງກໍບອກຝ່າຍຊາຍວ່າ "ທີ່ຮັກ, ດຽວນີ້ພວກເຮົາເອົາກັນເປັນຜົວເປັນເມຍແລ້ວ, ນ້ອງຕ້ອງການໃຫ້ອ້າຍໄລ່ສາວເລຂາອ້າຍອອກການ.

"ທີ່ຮັກ" ຝ່າຍຊາຍເອີ່ຍຂຶ້ນ "ນ້ອງເອງກະດຽວວ່າເຄີຍເປັນເລຂາມາກ່ອນຄືກັນ".

"ແມ່ນ" ນາງຕອບ "ກໍຍ້ອນແນວນັ້ນແລ້ວ ນ້ອງຈຶ່ງຢາກໃຫ້ອ້າຍໄລ່ມັນອອກການ".

#BAOKBU

Soon after their wedding the bride tells groom, "Darling, now that we are married, I want you to sack your secretary."

"But honey," says the groom, "you used to be a secretary yourself."

"Yes", she replies, "that's why I want you to sack her"

ຕາມພາສາ ກາຕູນ




● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

## ກອງປະຊຸມ..

(ຕໍ່ຈາກໜ້າ 1)

ຟັງລາຍງານຄວາມຄືບໜ້າການກະກຽມຄວາມພ້ອມຮອບດ້ານ ເພື່ອດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ພ້ອມທັງປຶກສາຫາລື, ຄົ້ນຄວ້າ ຕົກລົງເປັນເອກະພາບສູງຮັບຮອງເອົາ ແລະ ໃຫ້ທິດຊີ້ນຳຕໍ່ບັນດາເນື້ອໃນທີ່ຈະນຳສະເໜີໃນກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ໄປປັບປຸງໃຫ້ມີຄວາມຮັບປະກັນ ແລະ ສົມບູນຍິ່ງຂຶ້ນ ໂດຍໄດ້ລົງເລິກຊີ້ນຳຢ່າງລະອຽດຕໍ່ບັນດາອະນຸກຳມະການຕ່າງໆ ເປັນຕົ້ນແມ່ນ: ອະນຸກຳມະການເນື້ອໃນ, ອະນຸກຳມະການກົດລະບຽບ ແລະ ບຸກຄະລາກອນ, ອະນຸກຳມະການໂຄສະນາ ແລະ ຂະບວນການ, ອະນຸກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ອະນຸກຳມະການງົບປະມານ ແລະ ບໍລິຫານ ແລະ ວຽກງານປິ່ນອ້ອມອື່ນໆ; ພ້ອມທັງໄດ້ຮັບຮອງເອົາວັນທີ 6-8 ມັງກອນ2026ເປັນໄລຍະດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ.

ຄະນະບໍລິຫານງານສູນກາງພັກ ໄດ້ພ້ອມກັນຕີລາຄາວ່າ: ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ແມ່ນກອງປະຊຸມທີ່ມີຄວາມໝາຍສຳຄັນປະຫວັດສາດ, ເປັນບາດລ້ຽວອັນສຳຄັນໃນການສືບຕໍ່ຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ຮອບດ້ານມີຫຼັກການຂອງພັກ ສູ່ລວງເລິກ, ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ, ຮອບດ້ານ ໃນການນຳພາຂອງພັກປະຊາຊົນປະຕິວັດລາວ ແລະ ຖືເປັນບັ້ນສະຫຼຸບຖອດຖອນບົດຮຽນຈາກພຶດຕິກຳຕົວຈິງ ແລະ ເປັນຂີດໝາຍທາງການເມືອງ ແນໃສ່ຍົກສູງບົດບາດການນຳພາທີ່ເຂັ້ມແຂງຂອງພັກ ເພື່ອສືບຕໍ່ນຳພາພາລະກິດປະຕິວັດ, ບູລະນະລະບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນສູ່ສັງຄົມນິຍົມ.

ບັນດາສະຫາຍໃນຄະນະບໍລິຫານສູນກາງພັກ ໄດ້ພ້ອມກັນເຊີດຊູຄວາມຮັບຜິດຊອບໜ້າທີ່ການເມືອງ, ຕັ້ງໜ້າບຸກບືນ, ນຳພາ-ຊີ້ນຳ ການຈັດຕັ້ງປະຕິບັດວຽກງານ, ສຸມສະຕິປັນຍາ, ເຫື່ອແຮງທັງໝົດ ເຂົ້າໃນການນຳພາຊີ້ນຳການກະກຽມກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ປອ. ພິດສະໄໝ ບຸນວິໄລ

**ຄະນະບັນນາທິການ**
ທ່ານ ສຸລະສັກ ສຸວັນນະວົງ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອນສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ